ສະບັບວັນທີ 30 ກໍລະກົດ 2018

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ_______/ສພຊ

ນະຄອນຫຼວງວຽງຈັນ, ວັນທີ___________

# (ຮ່າງ)

# ກົດໝາຍ

# ວ່າດ້ວຍການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ, ການຕິດຕາມ ກວດກາ ວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ເພື່ອໃຫ້ມີປະສິດທິພາບ, ປະສິດທິຜົນ ແນໃສ່ເຮັດໃຫ້ຜູ້ຜະລິດສິນຄ້າພາຍໃນ ສາມາດແກ້ໄຂຄວາມເສຍຫາຍໄດ້, ເຮັດໃຫ້ມີຄວາມເຂັ້ມແຂງ ແລະ ເຕີບໃຫຍ່ຂະຫຍາຍຕົວປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ**

ການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ແມ່ນ ການນຳໃຊ້ມາດຕະການທາງດ້ານພາສີ ໃນໄລຍະເວລາໃດໜຶ່ງ ເພື່ອຕອບໂຕ້ການຄ້າທີ່ບໍ່ເປັນທຳຈາກ ການທຸ້ມຕະຫຼາດ ແລະ ການອຸດໜູນ ທີ່ເປັນສາເຫດເຮັດໃຫ້ຜູ້ຜະລິດສິນຄ້າພາຍໃນ ໄດ້ຮັບຄວາມເສຍຫາຍ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ຜູ້ຜະລິດສິນຄ້າພາຍໃນ** ໝາຍເຖິງ ຜູ້ຜະລິດພາຍໃນທັງໝົດທີ່ຜະລິດສິນຄ້າ ອຸດສາຫະກຳ, ກະສິກຳ ແລະ ສິນຄ້າປະເພດອື່ນທີ່ຄ້າຍຄືກັນ ຫຼື ມີຜົນຜະລິດລວມ ປະກອບເຂົ້າກັນເປັນອັດຕາສ່ວນທີ່ສຳຄັນຂອງການຜະລິດທັງໝົດຂອງສິນຄ້າດັ່ງກ່າວ. ໃນກໍລະນີ ຜູ້ຜະລິດສິນຄ້າທີ່ຄ້າຍຄືກັນໃດ ເປັນຜູ້ນຳເຂົ້າສິນຄ້າທຸ້ມຕະຫຼາດ ແລະ ສິນຄ້າທີ່ໄດ້ຮັບການອຸດໜູນ; ຫຼື ມີຄວາມກ່ຽວຂ້ອງກັບຜູ້ນຳເຂົ້າ ຫຼື ຜູ້ສົ່ງອອກສິນຄ້າທຸ້ມຕະຫຼາດ ແລະ ສິນຄ້າທີ່ໄດ້ຮັບການອຸດໜູນນັ້ນ ຈະບໍ່ຖືວ່າ ຜູ້ຜະລິດສິນຄ້າດັ່ງກ່າວເປັນຜູ້ຜະລິດສິນຄ້າພາຍໃນ.
2. **ສິນຄ້າທີ່ຖືກພິຈາລະນາ** ໝາຍເຖິງ ສິນຄ້າທີ່ຖືກກ່າວຫາວ່າມີການທຸ້ມຕະຫຼາດ ຫຼື ໄດ້ຮັບການອຸດໜູນ;

**3. ສິນຄ້າທີ່ຄ້າຍຄືກັນ** ໝາຍເຖິງ ສິນຄ້າທີ່ມີຄຸນລັກສະນະສະເພາະພື້ນຖານທີ່ຄືກັນ ຫຼື ຄ້າຍຄືກັນກັບສິນຄ້າທີ່ຜະລິດໃນ ສປປ ລາວ ເປັນຕົ້ນ ການປະຕິບັດງານ, ການນຳໃຊ້, ຄຸນນະພາບ, ອົງປະກອບ ດ້ານເຕັກນິກ ແລະ ຢູ່ໃນກຸ່ມສິນຄ້າປະເພດດຽວກັນ;

**4. ຜູ້ມີສ່ວນກ່ຽວຂ້ອງ** ໝາຍເຖິງ ຜູ້ຜະລິດ, ຜູ້ສົ່ງອອກ ຫຼື ຜູ້ນຳເຂົ້າສິນຄ້າ ແລະ ລັດຖະບານ ຂອງປະເທດຜູ້ສົ່ງອອກສິນຄ້າທຸ້ມຕະຫຼາດ ຫຼື ສິນຄ້າທີ່ໄດ້ຮັບການອຸດໜູນ ທີ່ສ້າງຄວາມເສຍຫາຍຕໍ່ຜູ້ຜະລິດສິນຄ້າພາຍໃນ ຊຶ່ງຜະລິດສິນຄ້າທີ່ຄ້າຍຄືກັນກັບສິນຄ້ານຳເຂົ້າ, ກຸ່ມ, ສະມາຄົມ ຫຼື ການຈັດຕັ້ງທີ່ເປັນຕົວແທນປົກປ້ອງຜົນປະໂຫຍດຂອງຜູ້ຜະລິດສິນຄ້າພາຍໃນ;

**5. ປະເທດຜູ້ສົ່ງອອກ** ໝາຍເຖິງ ປະເທດສົ່ງອອກສິນຄ້າທີ່ຖືກກ່າວຫາວ່າມີການທຸ້ມຕະຫຼາດ ຫຼື ໄດ້ຮັບການອຸດໜູນ ເຂົ້າມາໃນ ສປປ ລາວ;

**6. ຄວາມເສຍຫາຍຢ່າງຮ້າຍແຮງ** ໝາຍເຖິງ ຄວາມເສຍຫາຍທີ່ເກີດຂຶ້ນຈາກຜົນກະທົບຢ່າງຮ້າຍແຮງຂອງການນຳເຂົ້າສິນຄ້າທຸ້ມຕະຫຼາດ ຫຼື ສິນຄ້າທີ່ໄດ້ຮັບການອຸດໜູນຕໍ່ຜູ້ຜະລິດສິນຄ້າພາຍໃນ;

**7. ໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຢ່າງຮ້າຍແຮງ** ໝາຍເຖິງ ເຫດການທີ່ໃກ້ຈະເກີດຂຶ້ນກັບຜູ້ຜະລິດສິນຄ້າພາຍໃນ ຊຶ່ງຈະພາໃຫ້ມີຄວາມເສຍຫາຍຢ່າງຮ້າຍແຮງ ແລະ ແນ່ນອນ;

**8. ອຸປະສັກຖ່ວງດຶງຢ່າງຮ້າຍແຮງຕໍ່ການສ້າງຕັ້ງ ຫຼື ພັດທະນາວິສາຫະກິດພາຍໃນ** ໝາຍເຖິງ ຜົນກະທົບຢ່າງຮ້າຍແຮງຕໍ່ວິສາຫະກິດພາຍໃນທີ່ກຳລັງສ້າງຕັ້ງ ຫຼື ດຳເນີນທຸລະກິດ ໃນ ສປປ ລາວ;

**9. ລາຄາສະເລ່ຍຖ່ວງນ້ຳໜັກ** ໝາຍເຖິງ ລາຄາຄິດໄລ່ຈາກ ຜົນລວມຂອງລາຄາສິນຄ້າ ຄູນໃຫ້ ປະລິມານສິນຄ້າ ແລະ ຫານໃຫ້ ຜົນລວມຂອງປະລິມານສິນຄ້າ.

### ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ

ລັດ ຊຸກຍູ້ ແລະ ສົ່ງເສີມ ວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ດ້ວຍການວາງນະໂຍບາຍ ແລະ ມາດຕະການ ເພື່ອຕອບໂຕ້ການຄ້າທີ່ບໍ່ເປັນທຳຈາກການນຳເຂົ້າສິນຄ້າທຸ້ມຕະຫຼາດ ຫຼື ສິນຄ້າທີ່ໄດ້ຮັບການອຸດໜູນ, ແນໃສ່ສ້າງສະພາບແວດລ້ອມ ແລະ ເງື່ອນໄຂທີ່ເອື້ອອຳນວຍໃຫ້ແກ່ຜູ້ຜະລິດສິນຄ້າພາຍໃນ ໃຫ້ສາມາດເຕີບໃຫຍ່ຂະຫຍາຍຕົວ.

ລັດ ສະໜອງ ງົບປະມານ, ບຸກຄະລາກອນ, ພາຫະນະ, ວັດຖຸປະກອບ ໃຫ້ແກ່ອົງການຮັບຜິດຊອບຈັດຕັ້ງປະຕິບັດວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 5 ຫຼັກການກ່ຽວກັບການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ

ການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງກັບນະໂຍບາຍ ແລະ ກົດໝາຍ;
2. ຮັບປະກັນຄວາມໂປ່ງໃສ, ພາວະວິໄສ ແລະ ຍຸຕິທຳ;
3. ນຳໃຊ້ມາດຕະການໃນກໍລະນີທີ່ຈຳເປັນ ໂດຍມີການກຳນົດເພີ່ມອັດຕາພາສີໃຫ້ເໝາະສົມກັບຄວາມເສຍຫາຍຈາກການນຳເຂົ້າສິນຄ້າທຸ້ມຕະຫຼາດ ຫຼື ສິນຄ້າທີ່ໄດ້ຮັບການອຸດໜູນ ເຂົ້າມາໃນ ສປປ ລາວ;
4. ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

### ມາດຕາ 6 ຂອບເຂດການນຳໃຊ້

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນການຜະລິດສິນຄ້າຢູ່ພາຍໃນ ແລະ ຜູ້ນຳເຂົ້າສິນຄ້າທຸ້ມຕະຫຼາດ ຫຼື ສິນຄ້າທີ່ໄດ້ຮັບການອຸດໜູນ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການປົກປ້ອງຜູ້ຜະລິດສິນຄ້າພາຍໃນ ທີ່ໄດ້ຮັບຄວາມເສຍຫາຍຈາກການນໍາເຂົ້າສິນຄ້າທຸ້ມຕະຫຼາດ ຫຼື ສິນຄ້າທີ່ໄດ້ຮັບການອຸດໜູນ ດ້ວຍການແລກປ່ຽນຂໍ້ມູນ ຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ຄວາມສາມາດທາງດ້ານວິຊາການ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການທຸ້ມຕະຫຼາດ ແລະ ການອຸດໜູນ
### ໝວດທີ 1
### ການທຸ້ມຕະຫຼາດ

**ມາດຕາ 8 ການທຸ້ມຕະຫຼາດ**

ການທຸ້ມຕະຫຼາດ ແມ່ນ ການສົ່ງອອກສິນຄ້າເຂົ້າມາໃນ ສປປ ລາວ ເພື່ອຜົນປະໂຫຍດທາງການຄ້າ ຊຶ່ງມີ ລາຄາສົ່ງອອກຕໍ່າກວ່າລາຄາປົກກະຕິຂອງສິນຄ້າທີ່ຄ້າຍຄືກັນ ທີ່ຈໍາໜ່າຍພາຍໃນປະເທດຜູ້ສົ່ງອອກ.

**ມາດຕາ 9 ລາຄາສົ່ງອອກ**

ລາຄາສົ່ງອອກ ແມ່ນ ລາຄາສິນຄ້າຈາກປະເທດຜູ້ສົ່ງອອກ ທີ່ສົ່ງເຂົ້າມາຈໍາໜ່າຍຢູ່ ສປປ ລາວ ຊຶ່ງມີການຊໍາລະຕົວຈິງ ຫຼື ມີແຜນການຊໍາລະ.

ໃນກໍລະນີບໍ່ມີລາຄາສົ່ງອອກ ຫຼື ລາຄາສົ່ງອອກບໍ່ໜ້າເຊື່ອຖື ເນື່ອງຈາກມີການຮ່ວມມືກັນ ຫຼື ມີຜົນປະໂຫຍດຮ່ວມກັນລະຫວ່າງຜູ້ສົ່ງອອກ, ຜູ້ນໍາເຂົ້າ ຫຼື ບຸກຄົນທີສາມ ແມ່ນໃຫ້ຄິດໄລ່ລາຄາສົ່ງອອກ ຈາກລາຄາສິນຄ້ານັ້ນ ທີ່ໄດ້ຈໍາໜ່າຍຄັ້ງທໍາອິດໃຫ້ແກ່ຜູ້ຊື້ອື່ນທີ່ບໍ່ມີຄວາມກ່ຽວຂ້ອງກັບ ຜູ້ສົ່ງອອກ, ຜູ້ນໍາເຂົ້າ ຫຼື ບຸກຄົນທີສາມ.

ໃນກໍລະນີທີ່ສິນຄ້າ ບໍ່ໄດ້ມີການຈໍາໜ່າຍໃຫ້ແກ່ຜູ້ຊື້ອື່ນທີ່ບໍ່ມີຄວາມກ່ຽວຂ້ອງກັບ ຜູ້ສົ່ງອອກ, ຜູ້ນໍາເຂົ້າ ຫຼື ບຸກຄົນທີສາມ ຫຼື ບໍ່ໄດ້ຈໍາໜ່າຍ ຕາມສະພາບສິນຄ້າທີ່ນໍາເຂົ້າ ໃຫ້ກໍານົດລາຄາສົ່ງອອກບົນພື້ນຖານທີ່ສົມເຫດສົມຜົນ.

**ມາດຕາ 10 ລາຄາປົກກະຕິ**

ລາຄາປົກກະຕິ ແມ່ນ ລາຄາສິນຄ້າທີ່ຄ້າຍຄືກັນ ທີ່ຈໍາໜ່າຍເພື່ອຊົມໃຊ້ພາຍໃນປະເທດຜູ້ສົ່ງອອກ ຊຶ່ງມີການຊໍາລະຕົວຈິງ ຫຼື ມີແຜນການຊໍາລະໃນສະພາບການຄ້າປົກກະຕິ ແລະ ເປັນລາຄາທີ່ສາມາດນໍາມາປຽບທຽບໄດ້ ກັບລາຄາສົ່ງອອກມາຍັງ ສປປ ລາວ.

ໃນກໍລະນີບໍ່ມີການຈໍາໜ່າຍສິນຄ້າທີ່ຄ້າຍຄືກັນ ໃນຕະຫຼາດພາຍໃນຂອງປະເທດຜູ້ສົ່ງອອກ ຫຼື ການຈໍາໜ່າຍສິນຄ້າດັ່ງກ່າວ ບໍ່ສາມາດນໍາມາປຽບທຽບໄດ້ ໃຫ້ກໍານົດລາຄາປົກກະຕິ ໂດຍອີງໃສ່ລາຄາ ດັ່ງນີ້:

1. ລາຄາສົ່ງອອກສິນຄ້າທີ່ຄ້າຍຄືກັນໄປປະເທດທີສາມ ຖ້າມີເຫດຜົນທີ່ເຊື່ອໄດ້ວ່າ ລາຄານັ້ນສະແດງເຖິງລາຄາໃນຕະຫຼາດປະເທດຜູ້ສົ່ງອອກ; ຫຼື
2. ລາຄາຄິດໄລ່ຈາກຕົ້ນທຶນການຜະລິດຂອງປະເທດແຫຼ່ງກໍາເນີດສິນຄ້າ ບວກກັບຄ່າໃຊ້ຈ່າຍໃນການບໍລິຫານ, ການຈໍາໜ່າຍ ແລະ ຄ່າໃຊ້ຈ່າຍອື່ນ ລວມທັງກໍາໄລທີ່ເກີດຂຶ້ນ.

ໃນກໍລະນີລາຄາຕາມທີ່ໄດ້ກຳນົດໄວ້ໃນວັກ 1 ແລະ ວັກ 2 ຂໍ້ 1 ຂອງມາດຕານີ້ ຕໍ່າກວ່າຕົ້ນທຶນການຜະລິດ ບວກກັບຄ່າໃຊ້ຈ່າຍໃນການບໍລິຫານ, ການຈຳໜ່າຍ ແລະ ຄ່າໃຊ້ຈ່າຍອື່ນ ແມ່ນບໍ່ໃຫ້ນຳມາກຳນົດເປັນລາຄາປົກກະຕິ.

ໃນກໍລະນີທີ່ລະບົບເສດຖະກິດຂອງປະເທດຜູ້ສົ່ງອອກ ບໍ່ແມ່ນເສດຖະກິດກົນໄກຕະຫຼາດ, ການກຳນົດລາຄາປົກກະຕິ ໃຫ້ພິຈາລະນາປຽບທຽບຂໍ້ມູນລາຄາທີ່ມີຢູ່ໃນປະເທດທີສາມ ທີ່ມີລະບົບເສດຖະກິດກົນໄກຕະຫຼາດ, ແຕ່ຖ້າປະເທດທີສາມ ບໍ່ເໝາະສົມແກ່ການປຽບທຽບ ໃຫ້ພິຈາລະນາຈາກລາຄາຂອງສິນຄ້າທີ່ຄ້າຍຄືກັນ ທີ່ຈຳໜ່າຍໃນ ສປປ ລາວ ຫຼື ຂໍ້ມູນອື່ນທີ່ສົມເຫດສົມຜົນ.

**ມາດຕາ 11 ການກຳນົດອັດຕາການທຸ້ມຕະຫຼາດ**

ການກຳນົດອັດຕາການທຸ້ມຕະຫຼາດ ແມ່ນການຄິດໄລ່ສ່ວນຕ່າງ ລະຫວ່າງ ລາຄາປົກກະຕິ ກັບ ລາຄາສົ່ງອອກ ທີ່ດຳເນີນການຄ້າໃນລະດັບ ແລະ ໄລຍະເວລາດຽວກັນ ຊຶ່ງມີວິທີການປຽບທຽບ ດັ່ງນີ້:

1. ລາຄາປົກກະຕິສະເລ່ຍຖ່ວງນ້ຳໜັກ ກັບ ລາຄາສົ່ງອອກສະເລ່ຍຖ່ວງນ້ຳໜັກ;
2. ລາຄາປົກກະຕິ ກັບ ລາຄາສົ່ງອອກຂອງການເຮັດທຸລະກຳທາງການຄ້າແຕ່ລະຄັ້ງ; ຫຼື
3. ໃນກໍລະນີລາຄາສົ່ງອອກແຕກຕ່າງກັນລະຫວ່າງ ຜູ້ຊື້, ພາກພື້ນ ຫຼື ໄລຍະເວລາທີ່ສົ່ງອອກ, ໃຫ້ປຽບທຽບລະຫວ່າງລາຄາປົກກະຕິສະເລ່ຍຖ່ວງນ້ຳໜັກ ກັບ ລາຄາສົ່ງອອກຂອງການເຮັດທຸລະກຳທາງການຄ້າແຕ່ລະຄັ້ງ.

ຖ້າຫາກວ່າ ລາຄາປົກກະຕິ ແລະ ລາຄາສົ່ງອອກທີ່ນຳມາປຽບທຽບບໍ່ແມ່ນລາຄາໃນລະດັບ ແລະ ໄລຍະເວລາດຽວກັນ ແມ່ນໃຫ້ດັດປັບອົງປະກອບ ທີ່ສົ່ງຜົນກະທົບຕໍ່ການປຽບທຽບ.

ສຳລັບສູດຄິດໄລ່ການກຳນົດອັດຕາການທຸ້ມຕະຫຼາດ ແລະ ການປຽບທຽບລາຄາປົກກະຕິ ແລະ ລາຄາສົ່ງອອກ ແມ່ນໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2
## ການອຸດໜູນ

**ມາດຕາ 12 ການອຸດໜູນ**

ການອຸດໜູນ ແມ່ນ ການຊ່ວຍເຫຼືອທາງດ້ານການເງິນ ຫຼື ການສະໜັບສະໜູນໃດໜຶ່ງຂອງ ລັດຖະບານ ຫຼື ໜ່ວຍງານຂອງລັດ ໃຫ້ແກ່ວິສາຫະກິດ ເພື່ອຜົນປະໂຫຍດທາງການຄ້າ.

1. ການຊ່ວຍເຫຼືອທາງດ້ານການເງິນ ມີດັ່ງນີ້:

ລັດຖະບານ ໃຫ້ເງິນທຶນໂດຍທາງກົງແກ່ວິສາຫະກິດ ໃນຮູບແບບ ເງິນຊ່ວຍເຫຼືອລ້າ, ເງິນກູ້, ແລະ ການຊື້ຫຸ້ນ ຫຼື ລັດຖະບານ ໃຫ້ເງິນທຶນໂດຍທາງອ້ອມ ໃນຮູບແບບການຄ້ຳປະກັນເງິນກູ້;

ລັດຖະບານ ຍົກເວັ້ນ ຫຼື ຫຼຸດຜ່ອນ ການເກັບພັນທະຕ່າງໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ໃຫ້ແກ່ວິສາຫະກິດ;

ລັດຖະບານ ສະໜອງວັດຖຸດິບ ຫຼື ການບໍລິການ ເພື່ອປະກອບເຂົ້າໃນຂະບວນການຜະລິດສິນຄ້ານອກເໜືອຈາກພື້ນຖານໂຄງລ່າງທົ່ວໄປ, ຫຼື ການຊື້ສິນຄ້າຈາກວິສາຫະກິດ; ຫຼື

ລັດຖະບານ ຈ່າຍເງິນແກ່ກອງທຶນ ຫຼື ມອບໃຫ້ໜ່ວຍງານເອກະຊົນປະຕິບັດ ໜຶ່ງ ຫຼື ຫຼາຍໜ້າທີ່ຕາມທີ່ໄດ້ກຳນົດໃນວັກ 1, 2 ແລະ 3 ຂໍ້ 1 ຂອງມາດຕານີ້.

2. ການໃຫ້ການສະໜັບສະໜູນດ້ານລາຍໄດ້ ຫຼື ດ້ານລາຄາ ບໍ່ວ່າໃນຮູບແບບໃດກໍຕາມ.

**ມາດຕາ 13 ການອຸດໜູນແບບສະເພາະເຈາະຈົງ**

ການອຸດໜູນແບບສະເພາະເຈາະຈົງ ແມ່ນການອຸດໜູນສະເພາະໃຫ້ແກ່ ວິສາຫະກິດ, ອຸດສາຫະກໍາ, ກຸ່ມວິສາຫະກິດ ຫຼື ກຸ່ມອຸດສາຫະກໍາໃດໜຶ່ງ.

ການອຸດໜູນຕາມທີ່ໄດ້ກໍານົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້ ຈະຖືກນໍາໃຊ້ມາດຕະການຕອບໂຕ້ ຫາກເປັນການອຸດໜູນແບບສະເພາະເຈາະຈົງ ໃຫ້ແກ່ ວິສາຫະກິດ, ອຸດສາຫະກໍາ, ກຸ່ມວິສາຫະກິດ ຫຼື ກຸ່ມອຸດສາຫະກໍາໃດໜຶ່ງ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ການອຸດໜູນ ໃຫ້ແກ່ວິສາຫະກິດ, ອຸດສາຫະກໍາ, ກຸ່ມວິສາຫະກິດ ຫຼື ກຸ່ມອຸດສາຫະກໍາໃດໜຶ່ງ ໃນທາງກົດໝາຍ ຫຼື ທາງການຈັດຕັ້ງປະຕິບັດ;
2. ການອຸດໜູນ ໃຫ້ແກ່ວິສາຫະກິດ, ອຸດສາຫະກໍາ, ກຸ່ມວິສາຫະກິດ ຫຼື ກຸ່ມອຸດສາຫະກໍາໃດໜຶ່ງ ທີ່ຕັ້ງຢູ່ໃນເຂດທີ່ກໍານົດໄວ້ສະເພາະ;
3. ການອຸດໜູນ ເພື່ອເພີ່ມປະລິມານການສົ່ງອອກສິນຄ້າ;
4. ການອຸດໜູນ ໃຫ້ມີການນໍາໃຊ້ສິນຄ້າພາຍໃນ ເພື່ອທົດແທນການນໍາເຂົ້າ.

ນອກຈາກການອຸດໜູນທີ່ໄດ້ກໍານົດໄວ້ໃນຂໍ້ 1, 2, 3 ແລະ 4 ຂອງມາດຕານີ້ ໃຫ້ພິຈາລະນາປັດໃຈອື່ນຕື່ມ ເຊັ່ນ: ຈໍານວນວິສາຫະກິດທີ່ໄດ້ຮັບການອຸດໜູນ, ປະລິມານການອຸດໜູນ, ໄລຍະເວລາ ແລະ ຮູບແບບຂອງການອຸດໜູນ ໃຫ້ແກ່ວິສາຫະກິດ, ອຸດສາຫະກໍາ, ກຸ່ມວິສາຫະກິດ ຫຼື ກຸ່ມອຸດສາຫະກໍາ.

**ມາດຕາ 14 ການຄິດໄລ່ປະລິມານການອຸດໜູນ**

ການຄິດໄລ່ປະລິມານການອຸດໜູນ ແມ່ນການຄິດໄລ່ຈາກຜົນປະໂຫຍດທີ່ໄດ້ຮັບຕາມໄລຍະເວລາຂອງການອຸດໜູນ ໂດຍກໍານົດເປັນອັດຕາຕໍ່ຫົວໜ່ວຍສິນຄ້າຂອງຜູ້ໄດ້ຮັບການອຸດໜູນ.

ການຄິດໄລ່ຜົນປະໂຫຍດທີ່ໄດ້ຮັບຈາກການອຸດໜູນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຜົນປະໂຫຍດທີ່ໄດ້ຮັບຈາກການອຸດໜູນໃນຮູບແບບເງິນຊ່ວຍເຫຼືອລ້າ ແມ່ນໃຫ້ຄິດໄລ່ຈາກຈໍານວນເງິນຊ່ວຍເຫຼືອລ້າທີ່ວິສາຫະກິດໄດ້ຮັບຕົວຈິງ;
2. ຜົນປະໂຫຍດທີ່ໄດ້ຮັບຈາກການອຸດໜູນໃນຮູບແບບເງິນກູ້ ແມ່ນໃຫ້ຄິດໄລ່ຈາກຄວາມແຕກຕ່າງລະຫວ່າງ ອັດຕາດອກເບ້ຍເງິນກູ້ ທີ່ວິສາຫະກິດຄວນຈ່າຍໃນອັດຕາທະນາຄານ ກັບ ອັດຕາດອກເບ້ຍເງິນກູ້ທີ່ຈ່າຍໃຫ້ແກ່ລັດຖະບານ;
3. ຜົນປະໂຫຍດທີ່ໄດ້ຮັບຈາກການອຸດໜູນໃນຮູບແບບການຄໍ້າປະກັນເງິນກູ້ ແມ່ນໃຫ້ຄິດໄລ່ຈາກຄວາມແຕກຕ່າງ ລະຫວ່າງ ອັດຕາດອກເບ້ຍເງິນກູ້ຂອງທະນາຄານ ທີ່ບໍ່ມີການຄໍ້າປະກັນ ກັບ ອັດຕາດອກເບ້ຍເງິນກູ້ ທີ່ໄດ້ຮັບການຄໍ້າປະກັນຈາກລັດຖະບານ ;
4. ຜົນປະໂຫຍດທີ່ໄດ້ຮັບຈາກການອຸດໜູນໃນຮູບແບບການຊື້ຮຸ້ນ ແມ່ນໃຫ້ຄິດໄລ່ຈາກຈໍານວນທຶນຕົວຈິງ ທີ່ວິສາຫະກິດໄດ້ຮັບຈາກການຈໍາໜ່າຍຮຸ້ນ ໃຫ້ແກ່ລັດຖະບານ;
5. ຜົນປະໂຫຍດທີ່ໄດ້ຮັບຈາກການອຸດໜູນໃນຮູບແບບການສະໜອງສິນຄ້າ ຫຼື ການບໍລິການ ແມ່ນໃຫ້ຄິດໄລ່ຈາກຄວາມແຕກຕ່າງ ລະຫວ່າງ ລາຄາປົກກະຕິຂອງສິນຄ້າ ຫຼື ການບໍລິການໃນຕະຫຼາດ ແລະ ລາຄາທີ່ວິສາຫະກິດໄດ້ຈ່າຍຕົວຈິງໃຫ້ແກ່ລັດຖະບານ;
6. ຜົນປະໂຫຍດທີ່ໄດ້ຮັບຈາກການອຸດໜູນໃນຮູບແບບການຊື້ສິນຄ້າ ແມ່ນໃຫ້ຄິດໄລ່ຈາກຄວາມແຕກຕ່າງ ລະຫວ່າງ ລາຄາທີ່ລັດຖະບານໄດ້ຈ່າຍໃຫ້ຕົວຈິງ ແລະ ລາຄາປົກກະຕິຂອງສິນຄ້າດັ່ງກ່າວໃນຕະຫຼາດ.
7. ຜົນປະໂຫຍດທີ່ໄດ້ຮັບຈາກການອຸດໜູນໃນຮູບແບບການຍົກເວັ້ນ ຫຼື ຫຼຸດຜ່ອນການເກັບພັນທະຕ່າງໆຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ ໃຫ້ແກ່ວິສາຫະກິດ ແມ່ນໃຫ້ຄິດໄລ່ຈາກຄວາມ

ແຕກຕ່າງ ລະຫວ່າງ ຈໍານວນເງິນທີ່ວິສາຫະກິດ ຕ້ອງຈ່າຍໃຫ້ແກ່ລັດຖະບານ ກັບ ຈໍານວນເງິນ ທີ່ວິສາຫະກິດໄດ້ຈ່າຍຕົວຈິງ.

## ພາກທີ III
## ການກໍານົດຄວາມເສຍຫາຍຕໍ່ຜູ້ຜະລິດສິນຄ້າພາຍໃນ

**ມາດຕາ 15 ຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ**

ຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ ແມ່ນ ການສູນເສຍຜົນປະໂຫຍດທາງການຄ້າຈາກການນໍາເຂົ້າສິນຄ້າທຸ້ມຕະຫຼາດ ຫຼື ສິນຄ້າທີ່ໄດ້ຮັບການອຸດໜູນ ຊຶ່ງເຮັດໃຫ້ຜູ້ຜະລິດສິນຄ້າພາຍໃນ ໄດ້ຮັບຄວາມເສຍຫາຍ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີຄວາມເສຍຫາຍຢ່າງຮ້າຍແຮງ;
2. ມີໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຢ່າງຮ້າຍແຮງ;
3. ເປັນອຸປະສັກຖ່ວງດຶງຢ່າງຮ້າຍແຮງຕໍ່ການສ້າງຕັ້ງ ຫຼື ພັດທະນາວິສາຫະກິດພາຍໃນ.

**ມາດຕາ 16 ການກໍານົດຄວາມເສຍຫາຍຢ່າງຮ້າຍແຮງ**

ການກໍານົດຄວາມເສຍຫາຍຢ່າງຮ້າຍແຮງຕໍ່ຜູ້ຜະລິດສິນຄ້າພາຍໃນ ຈາກການທຸ້ມຕະຫຼາດ ຫຼື ການອຸດໜູນ ຕ້ອງພິຈາລະນາຈາກຫຼັກຖານຂໍ້ມູນຄວາມຈິງ ດັ່ງນີ້:

1. ປະລິມານການນໍາເຂົ້າສິນຄ້າທຸ້ມຕະຫຼາດ ຫຼື ສິນຄ້າທີ່ໄດ້ຮັບການອຸດໜູນ ເພີ່ມຂຶ້ນແບບເດັດຖານ ຫຼື ທຽບຖານ ທຽບໃສ່ການຜະລິດ ຫຼື ການບໍລິໂພກພາຍໃນ ສປປ ລາວ;

2. ຜົນກະທົບຂອງສິນຄ້າທຸ້ມຕະຫຼາດ ຫຼື ສິນຄ້າທີ່ໄດ້ຮັບການອຸດໜູນ ທີ່ມີຕໍ່ລາຄາສິນຄ້າທີ່ຄ້າຍຄືກັນໃນ ສປປ ລາວ ຊຶ່ງເຮັດໃຫ້ມີການຈໍາໜ່າຍຫຼຸດລາຄາ, ກົດລາຄາ ຫຼື ບໍ່ສາມາດຂຶ້ນລາຄາໄດ້;

3. ຜົນກະທົບຂອງສິນຄ້າທຸ້ມຕະຫຼາດ ຫຼື ສິນຄ້າທີ່ໄດ້ຮັບການອຸດໜູນ ທີ່ມີຕໍ່ຜູ້ຜະລິດສິນຄ້າພາຍໃນຕ້ອງພິຈາລະນາຈາກປັດໃຈ ດັ່ງນີ້:

ການຫຼຸດລົງຕົວຈິງ ຫຼື ມີທ່າອ່ຽງຫຼຸດລົງຂອງຍອດຈໍາໜ່າຍ, ກໍາໄລ, ຜົນຜະລິດ, ສ່ວນແບ່ງຕະຫຼາດ, ຜະລິດຕະພາບ, ຜົນຕອບແທນຈາກການລົງທຶນ ຫຼື ກໍາລັງການຜະລິດ;

ປັດໃຈທີ່ມີຜົນກະທົບຕໍ່ລາຄາພາຍໃນປະເທດ;

ຜົນກະທົບຕົວຈິງ ແລະ ທ່າອ່ຽງທີ່ມີຜົນກະທົບທາງລົບຕໍ່ ກະແສເງິນສົດ, ສິນຄ້າຄ້າງສາງ, ການຈ້າງງານ, ຄ່າແຮງງານ, ອັດຕາການເຕີບໂຕຂອງທຸລະກິດ, ຄວາມສາມາດ ໃນການເພີ່ມທຶນ ຫຼື ການລົງທຶນ.

ສໍາລັບວິທີການກໍານົດປັດໄຈຄວາມເສຍຫາຍຢ່າງຮ້າຍແຮງ ແມ່ນໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 17 ການກໍານົດໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຢ່າງຮ້າຍແຮງ**

ການກໍານົດໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຢ່າງຮ້າຍແຮງຕໍ່ຜູ້ຜະລິດສິນຄ້າພາຍໃນ ຈາກການທຸ້ມຕະຫຼາດ ຫຼື ການອຸດໜູນ ຕ້ອງພິຈາລະນາຕາມຂໍ້ມູນຄວາມຈິງ ທີ່ມີເຫດການປ່ຽນແປງເຮັດໃຫ້ເຫັນຢ່າງຈະແຈ້ງວ່າ ການທຸ້ມຕະຫຼາດ ຫຼື ການອຸດໜູນນັ້ນ ໃກ້ຈະເກີດຂຶ້ນ ແລະ ກໍ່ໃຫ້ເກີດຄວາມເສຍຫາຍຢ່າງແນ່ນອນ ຊຶ່ງຕ້ອງພິຈາລະນາຈາກປັດໄຈ ດັ່ງນີ້:

1. ການນໍາເຂົ້າສິນຄ້າທຸ້ມຕະຫຼາດ ຫຼື ສິນຄ້າທີ່ໄດ້ຮັບການອຸດໜູນ ມີອັດຕາເພີ່ມຂຶ້ນໃນສັດສ່ວນທີ່ສໍາຄັນ ແລະ ຊີ້ໃຫ້ເຫັນຄວາມເປັນໄປໄດ້ວ່າ ອາດມີການນໍາເຂົ້າສິນຄ້າດັ່ງກ່າວໃນປະລິມານທີ່ເພີ່ມຂຶ້ນຢ່າງຫຼວງຫຼາຍ;

2. ຄວາມອາດສາມາດໃນການຈໍາໜ່າຍສິນຄ້າຂອງຜູ້ສົ່ງອອກ ຈະເພີ່ມສູງຂຶ້ນໃນອານາຄົດອັນໃກ້ ແລະ ຊີ້ໃຫ້ເຫັນຄວາມເປັນໄປໄດ້ວ່າ ອາດມີການສົ່ງອອກສິນຄ້າທຸ້ມຕະຫຼາດ ຫຼື ສິນຄ້າທີ່ໄດ້ຮັບການອຸດໜູນ ເຂົ້າມາໃນ ສປປ ລາວ ຫຼາຍຂຶ້ນ;

3. ລາຄາຂອງການນໍາເຂົ້າສິນຄ້າທຸ້ມຕະຫຼາດ ຫຼື ສິນຄ້າທີ່ໄດ້ຮັບການອຸດໜູນ ເຮັດໃຫ້ມີການກົດລາຄາ ຫຼື ບໍ່ສາມາດຂຶ້ນລາຄາຂອງສິນຄ້າພາຍໃນໄດ້ ແລະ ມີທ່າອ່ຽງວ່າຄວາມຕ້ອງການໃນການນໍາເຂົ້າສິນຄ້າດັ່ງກ່າວຈະເພີ່ມຂຶ້ນ;

4. ປະລິມານສິນຄ້າຄ້າງສາງຂອງ ສິນຄ້າທຸ້ມຕະຫຼາດ ຫຼື ສິນຄ້າທີ່ໄດ້ຮັບການອຸດໜູນ ທີ່ກໍາລັງດໍາເນີນການສືບຫາຂໍ້ມູນ.

ສໍາລັບການອຸດໜູນ ຕ້ອງພິຈາລະນາເພີ່ມຕື່ມກ່ຽວກັບ ຮູບແບບຂອງການອຸດໜູນ ແລະ ທ່າອ່ຽງຜົນກະທົບທາງການຄ້າ ທີ່ອາດຈະເກີດຂຶ້ນ.

## ມາດຕາ 18 ການກໍານົດອຸປະສັກຖ່ວງດຶງຢ່າງຮ້າຍແຮງຕໍ່ການສ້າງຕັ້ງ ຫຼື ພັດທະນາວິສາຫະກິດພາຍໃນ

ການກໍານົດອຸປະສັກຖ່ວງດຶງຢ່າງຮ້າຍແຮງຕໍ່ການສ້າງຕັ້ງ ຫຼື ພັດທະນາວິສາຫະກິດພາຍໃນ ຕ້ອງພິຈາລະນາຈາກຫຼັກຖານຂໍ້ມູນຕົວຈິງທີ່ສະແດງໃຫ້ເຫັນ ຄວາມເປັນໄປໄດ້ຂອງໄລຍະເວລາໃນການສ້າງຕັ້ງ ຫຼື ການພັດທະນາຂອງວິສາຫະກິດພາຍໃນ ມີຄວາມຊັກຊ້າ ຊຶ່ງຕ້ອງພິຈາລະນາຈາກປັດໄຈ ດັ່ງນີ້:

1. ແຜນສ້າງຕັ້ງ ແລະ ພັດທະນາວິສາຫະກິດພາຍໃນ;
2. ຄວາມສາມາດໃນການຜະລິດ ແລະ ຜົນຜະລິດ;
3. ປະລິມານ ແລະ ມູນຄ່າການຈໍາໜ່າຍສິນຄ້າພາຍໃນ;
4. ສ່ວນແບ່ງຕະຫຼາດ, ລາຍຮັບ ແລະ ກໍາໄລ;
5. ການສົ່ງອອກ ແລະ ນໍາເຂົ້າສິນຄ້າທີ່ຖືກພິຈາລະນາ;
6. ສິນຄ້າຄ້າງສາງ;
7. ການຈ້າງງານ ແລະ ຄ່າແຮງງານ;
8. ປັດໄຈອື່ນໆ ທີ່ເຫັນວ່າເໝາະສົມ.

## ມາດຕາ 19 ການກໍານົດຄວາມກ່ຽວພັນລະຫວ່າງການທຸ້ມຕະຫຼາດ ຫຼື ການອຸດໜູນ ກັບຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ

ການກໍານົດຄວາມກ່ຽວພັນລະຫວ່າງການທຸ້ມຕະຫຼາດ ຫຼື ການອຸດໜູນ ກັບຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ ຕ້ອງພິຈາລະນາຈາກຫຼັກຖານທີ່ກ່ຽວຂ້ອງທັງໝົດ ຂອງການທຸ້ມຕະຫຼາດ ຫຼື ການອຸດໜູນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 16, 17 ແລະ 18 ຂອງກົດໝາຍສະບັບນີ້.

ປັດໄຈອື່ນ ທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ຜູ້ຜະລິດສິນຄ້າພາຍໃນ ກໍຕ້ອງພິຈາລະນາເຊັ່ນດຽວກັນ ແຕ່ບໍ່ໃຫ້ຖືວ່າເປັນປັດໄຈທີ່ກ່ຽວພັນກັບການທຸ້ມຕະຫຼາດ ຫຼື ການອຸດໜູນ ເຊັ່ນ:

1. ປະລິມານ ແລະ ລາຄາຂອງສິນຄ້ານໍາເຂົ້າທີ່ບໍ່ໄດ້ຈໍາໜ່າຍໃນລາຄາທຸ້ມຕະຫຼາດ ຫຼື ທີ່ໄດ້ຮັບການອຸດໜູນ;

2. ການປ່ຽນແປງດ້ານຄວາມຕ້ອງການ ຫຼື ການປ່ຽນແປງຂອງຮູບແບບການບໍລິໂພກ;

3. ການຈຳກັດທາງການຄ້າ ແລະ ການແຂ່ງຂັນ ລະຫວ່າງ ຜູ້ຜະລິດສິນຄ້າພາຍໃນ ແລະ ຕ່າງປະເທດ;
4. ການພັດທະນາທາງດ້ານເຕັກໂນໂລຊີ;
5. ນະໂຍບາຍການຜະລິດ ເພື່ອສົ່ງອອກ ແລະ ຄວາມສາມາດໃນການຜະລິດ.

## ພາກທີ IV
## ການສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍຈາກການທຸ້ມຕະຫຼາດ ຫຼື ການອຸດໜູນ

### ມາດຕາ 20 ການສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍຈາກການທຸ້ມຕະຫຼາດ ຫຼື ການອຸດໜູນ

ການສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍຈາກການທຸ້ມຕະຫຼາດ ຫຼື ການອຸດໜູນ ແມ່ນ ການຊອກຫາຂໍ້ມູນເພື່ອຢັ້ງຢືນຄວາມເສຍຫາຍຢ່າງຮ້າຍແຮງ; ຫຼື ໄພຂົ່ມຂູ່ທີ່ຈະສ້າງຄວາມເສຍຫາຍຢ່າງຮ້າຍແຮງ; ຫຼື ອຸປະສັກຖ່ວງດຶງຢ່າງຮ້າຍແຮງຕໍ່ການສ້າງຕັ້ງ ຫຼື ພັດທະນາວິສາຫະກິດພາຍໃນ ຍ້ອນການທຸ້ມຕະຫຼາດ ຫຼື ການອຸດໜູນ.

ການສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍຈາກການທຸ້ມຕະຫຼາດ ຫຼື ການອຸດໜູນ ຈະດຳເນີນໄດ້ກໍຕໍ່ເມື່ອມີສາເຫດໃດໜຶ່ງທີ່ໄດ້ກຳນົດໄວ້ໃນ ມາດຕາ 21 ຂອງກົດໝາຍສະບັບນີ້.

ກະຊວງອຸດສາຫະກຳ ແລະ ການຄ້າ ດຳເນີນການສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍຈາກການທຸ້ມຕະຫຼາດ ຫຼື ການອຸດໜູນ ໂດຍມີການປະສານສົມທົບກັບກະຊວງ, ອົງການອື່ນທີ່ກ່ຽວຂ້ອງ ກ່ອນນຳສະເໜີ ລັດຖະບານ ພິຈາລະນານຳໃຊ້ມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍສະບັບນີ້.

### ມາດຕາ 21 ສາເຫດທີ່ພາໃຫ້ມີການສືບຫາຂໍ້ມູນ

ສາເຫດທີ່ພາໃຫ້ມີການສືບຫາຂໍ້ມູນ ກ່ຽວກັບຄວາມເສຍຫາຍຈາກການທຸ້ມຕະຫຼາດ ຫຼື ການອຸດໜູນ ມີ ດັ່ງນີ້:

1. ມີຄຳຮ້ອງຂອງຜູ້ຜະລິດສິນຄ້າພາຍໃນ ຫຼື ຜູ້ຕາງໜ້າຜູ້ຜະລິດສິນຄ້າພາຍໃນ;
2. ມີການພົບເຫັນຂໍ້ມູນ ຫຼື ຫຼັກຖານກ່ຽວກັບຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ ໂດຍເຈົ້າໜ້າທີ່ສືບຫາຂໍ້ມູນ.

### ມາດຕາ 22 ຄຳຮ້ອງຂອງຜູ້ຜະລິດສິນຄ້າພາຍໃນ ຫຼື ຜູ້ຕາງໜ້າຜູ້ຜະລິດສິນຄ້າພາຍໃນ

ຜູ້ຜະລິດສິນຄ້າພາຍໃນ ຫຼື ຜູ້ຕາງໜ້າຜູ້ຜະລິດສິນຄ້າພາຍໃນ ສາມາດຍື່ນຄຳຮ້ອງຕໍ່ ກະຊວງອຸດສາຫະກຳ ແລະ ການຄ້າ ຕາມແບບພິມ ເພື່ອດຳເນີນການສືບຫາຂໍ້ມູນຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16, 17 ແລະ 18 ຂອງກົດໝາຍສະບັບນີ້.

ຄຳຮ້ອງຈະໄດ້ຮັບການພິຈາລະນາ ກໍຕໍ່ເມື່ອປະລິມານການຜະລິດຂອງຜູ້ສະໜັບສະໜູນໃຫ້ດຳເນີນການສືບຫາຂໍ້ມູນ ແລະ ຜູ້ຄັດຄ້ານລວມກັນຫຼາຍກວ່າ ຫ້າສິບສ່ວນຮ້ອຍ ຂອງປະລິມານການຜະລິດສິນຄ້າພາຍໃນທີ່ຄ້າຍຄືກັນ. ໃນນັ້ນ, ຜູ້ສະໜັບສະໜູນໃຫ້ດຳເນີນການສືບຫາຂໍ້ມູນ ຕ້ອງມີປະລິມານການຜະລິດຫຼາຍກວ່າ ຊາວຫ້າສ່ວນຮ້ອຍ ຂອງປະລິມານການຜະລິດສິນຄ້າພາຍໃນທີ່ຄ້າຍຄືກັນທັງໝົດ.

ຄຳຮ້ອງ ຕ້ອງປະກອບ ດ້ວຍເອກະສານທີ່ມີຂໍ້ມູນ ດັ່ງນີ້:

1. ຂໍ້ມູນທົ່ວໄປຂອງຜູ້ຜະລິດສິນຄ້າພາຍໃນ;
2. ລາຍລະອຽດຂອງສິນຄ້າທີ່ຄ້າຍຄືກັນ ທີ່ຜະລິດພາຍໃນ ແລະ ສິນຄ້າທີ່ຖືກພິຈາລະນາ;
3. ຜູ້ຜະລິດ, ຜູ້ສົ່ງອອກ ແລະ ຜູ້ນຳເຂົ້າ ສິນຄ້າທີ່ຖືກພິຈາລະນາ;
4. ລາຄາປົກກະຕິ, ລາຄາສົ່ງອອກ ແລະ ອັດຕາການທຸ້ມຕະຫຼາດ;

5. ຮູບແບບ, ໄລຍະເວລາ ແລະ ປະລິມານຂອງການອຸດໜູນ;

6. ການປະເມີນຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ;

7. ຄວາມກ່ຽວພັນລະຫວ່າງ ການທຸ້ມຕະຫຼາດ ຫຼື ການອຸດໜູນ ກັບຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ.

ພາຍຫຼັງໄດ້ຮັບຄໍາຮ້ອງ ເຈົ້າໜ້າທີ່ສືບຫາຂໍ້ມູນ ຕ້ອງພິຈາລະນາຂໍ້ມູນ ຫຼື ຫຼັກຖານພາຍໃນ ສີ່ສິບຫ້າ ວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງຄົບຖ້ວນເປັນຕົ້ນໄປ, ຖ້າຫາກບໍ່ສາມາດສໍາເລັດໄດ້ພາຍໃນກໍານົດເວລາດັ່ງກ່າວ ເຈົ້າໜ້າທີ່ສືບຫາຂໍ້ມູນ ສາມາດສະເໜີຕໍ່ ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອພິຈາລະນາຕໍ່ເວລາ ແຕ່ສາມາດຕໍ່ໄດ້ສູງສຸດບໍ່ເກີນ ສາມສິບວັນ.

ໃນກໍລະນີ ເຈົ້າໜ້າທີ່ສືບຫາຂໍ້ມູນ ບໍ່ພົບເຫັນຂໍ້ມູນຫຼັກຖານ ທີ່ຊີ້ໃຫ້ເຫັນຄວາມກ່ຽວພັນລະຫວ່າງ ການທຸ້ມຕະຫຼາດ ຫຼື ການອຸດໜູນ ກັບຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ, ເຈົ້າໜ້າທີ່ສືບຫາຂໍ້ມູນ ຕ້ອງລາຍງານ ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອຊາບ ແລະ ແຈ້ງໃຫ້ຜູ້ຍື່ນຄໍາຮ້ອງກ່ຽວກັບຜົນການວິໄຈຂໍ້ມູນດັ່ງກ່າວ.

ໃນກໍລະນີ ເຈົ້າໜ້າທີ່ສືບຫາຂໍ້ມູນ ພົບເຫັນຂໍ້ມູນຫຼັກຖານຈາກຜົນຂອງການຄົ້ນຄວ້າຄໍາຮ້ອງດັ່ງກ່າວ ທີ່ຢັ້ງຢືນວ່າມີຄວາມກ່ຽວພັນລະຫວ່າງການທຸ້ມຕະຫຼາດ ຫຼື ການອຸດໜູນ ກັບຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ, ເຈົ້າໜ້າທີ່ສືບຫາຂໍ້ມູນ ຕ້ອງລາຍງານຕໍ່ ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອພິຈາລະນາອອກຂໍ້ຕົກລົງໃຫ້ດໍາເນີນການສືບຫາຂໍ້ມູນ.

ໃນກໍລະນີຂອງການອຸດໜູນ ຕ້ອງໄດ້ແຈ້ງໃຫ້ລັດຖະບານປະເທດຜູ້ສົ່ງອອກ ເພື່ອດໍາເນີນການປຶກສາຫາລື ພາຍຫຼັງທີ່ໄດ້ຮັບຄໍາຮ້ອງ.

**ມາດຕາ 23 ການພົບເຫັນຂໍ້ມູນ ຫຼື ຫຼັກຖານໂດຍເຈົ້າໜ້າທີ່ສືບຫາຂໍ້ມູນ**

ເມື່ອເຈົ້າໜ້າທີ່ສືບຫາຂໍ້ມູນ ຫາກພົບເຫັນຂໍ້ມູນຫຼັກຖານ ທີ່ຢັ້ງຢືນວ່າມີຄວາມກ່ຽວພັນລະຫວ່າງການທຸ້ມຕະຫຼາດ ຫຼື ການອຸດໜູນ ກັບຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ ຕ້ອງລາຍງານຕໍ່ ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອພິຈາລະນາອອກຂໍ້ຕົກລົງໃຫ້ດໍາເນີນການສືບຫາຂໍ້ມູນ.

**ມາດຕາ 24 ຂັ້ນຕອນການດໍາເນີນການສືບຫາຂໍ້ມູນ**

ການດໍາເນີນການສືບຫາຂໍ້ມູນ ໃຫ້ດໍາເນີນຕາມຂັ້ນຕອນ ດັ່ງນີ້:

1. ອອກຂໍ້ຕົກລົງໃຫ້ດໍາເນີນການສືບຫາຂໍ້ມູນ;
2. ດໍາເນີນການສືບຫາຂໍ້ມູນ;
3. ສະຫຼຸບ ແລະ ລາຍງານຜົນການສືບຫາຂໍ້ມູນ.

**ມາດຕາ 25 ການອອກຂໍ້ຕົກລົງໃຫ້ດໍາເນີນການສືບຫາຂໍ້ມູນ**

ພາຍຫຼັງໄດ້ຮັບບົດລາຍງານຈາກເຈົ້າໜ້າທີ່ສືບຫາຂໍ້ມູນ, ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ພິຈາລະນາອອກຂໍ້ຕົກລົງໃຫ້ດໍາເນີນການສືບຫາຂໍ້ມູນ ພ້ອມທັງ ແຕ່ງຕັ້ງຄະນະສືບຫາຂໍ້ມູນ ກ່ຽວກັບຄວາມເສຍຫາຍຈາກການທຸ້ມຕະຫຼາດ ຫຼື ການອຸດໜູນ.

ຄະນະສືບຫາຂໍ້ມູນ ກ່ຽວກັບຄວາມເສຍຫາຍຈາກການທຸ້ມຕະຫຼາດ ຫຼື ການອຸດໜູນ ປະກອບດ້ວຍ ເຈົ້າໜ້າທີ່ສືບຫາຂໍ້ມູນ, ພະນັກງານຂອງຂະແໜງການອຸດສາຫະກໍາ ແລະ ການຄ້າ ແລະ ຜູ້ຕາງໜ້າຈາກພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 26 ການດໍາເນີນການສືບຫາຂໍ້ມູນ**

ພາຍຫຼັງ ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ອອກຂໍ້ຕົກລົງໃຫ້ດໍາເນີນການສືບຫາຂໍ້ມູນ ຄະນະສືບຫາຂໍ້ມູນ ຕ້ອງດໍາເນີນຕາມຂັ້ນຕອນ ດັ່ງນີ້:

1. ແຈ້ງໃຫ້ປະເທດຜູ້ສົ່ງອອກ, ຜູ້ຍື່ນຄໍາຮ້ອງ, ອົງການການຄ້າໂລກ ແລະ ຜູ້ມີສ່ວນກ່ຽວຂ້ອງຊາບ;
2. ເຜີຍແຜ່ຂໍ້ຕົກລົງໃຫ້ດໍາເນີນການສືບຫາຂໍ້ມູນໃນສື່ໃດໜຶ່ງ ເພື່ອໃຫ້ສັງຄົມຊາບ;
3. ສົ່ງແບບສອບຖາມໃຫ້ກັບຜູ້ສົ່ງອອກ ຫຼື ຜູ້ຜະລິດສິນຄ້າທີ່ຖືກພິຈາລະນາ ເພື່ອສະໜອງຂໍ້ມູນ;
4. ວິເຄາະຂໍ້ມູນທີ່ໄດ້ຮັບຈາກແບບສອບຖາມ ຫຼື ຂໍ້ມູນເພີ່ມຕື່ມໃນກໍລະນີຈໍາເປັນ;
5. ຈັດກອງປະຊຸມເປີດກ້ວາງໃຫ້ຜູ້ມີສ່ວນກ່ຽວຂ້ອງ ໄດ້ສະແດງຫຼັກຖານ, ເອກະສານ ແລະ ຄວາມຄິດເຫັນກ່ຽວກັບບົດລາຍງານຂອງການດໍາເນີນສືບຫາຂໍ້ມູນເບື້ອງຕົ້ນ;
6. ເກັບກໍາ ແລະ ວິເຄາະຂໍ້ມູນເພີ່ມຕື່ມໃນປະເທດຜູ້ສົ່ງອອກ ເພື່ອຢັ້ງຢືນຄວາມຖືກຕ້ອງ ແລະ ຄວາມເປັນຈິງ ກ່ຽວກັບຜົນກະທົບຈາກການທຸ້ມຕະຫຼາດ ຫຼື ການອຸດໜູນ;
7. ຈັດກອງປະຊຸມເປີດກ້ວາງໃຫ້ຜູ້ມີສ່ວນກ່ຽວຂ້ອງ ໄດ້ສະແດງຫຼັກຖານ, ເອກະສານ ແລະ ຄວາມຄິດເຫັນກ່ຽວກັບບົດລາຍງານຂອງການດໍາເນີນສືບຫາຂໍ້ມູນຂັ້ນສຸດທ້າຍ.

ໃນກໍລະນີທີ່ ຜູ້ສົ່ງອອກ, ຜູ້ຜະລິດ, ຜູ້ນໍາເຂົ້າ ຫຼື ປະເພດສິນຄ້າທີ່ຖືກພິຈາລະນາ ມີຈໍານວນຫຼາຍ ຄະນະສືບຫາຂໍ້ມູນ ຕ້ອງນໍາໃຊ້ວິທີການຄັດເລືອກແບບສຸ່ມຕົວຢ່າງ ເພື່ອກໍານົດ ຜູ້ສົ່ງອອກ, ຜູ້ຜະລິດ ຫຼື ປະເພດສິນຄ້າ ຕາມຂໍ້ມູນສະຖິຕິທີ່ເໝາະສົມ.

ສໍາລັບການກໍານົດໄລຍະເວລາລະອຽດຂອງຂັ້ນຕອນການສືບຫາຂໍ້ມູນ ແມ່ນໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 27 ການສະຫຼຸບ ແລະ ລາຍງານຜົນການສືບຫາຂໍ້ມູນ**

ພາຍຫຼັງໄດ້ສໍາເລັດການສືບຫາຂໍ້ມູນ ຄະນະສືບຫາຂໍ້ມູນ ຕ້ອງສະຫຼຸບ ແລະ ລາຍງານຜົນການສືບຫາຂໍ້ມູນຂັ້ນສຸດທ້າຍ ພ້ອມດ້ວຍ ຂໍ້ມູນຫຼັກຖານທັງໝົດທີ່ເກັບກໍາໄດ້ ຕໍ່ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອນໍາສະເໜີຕໍ່ ລັດຖະບານ ພິຈາລະນາຕົກລົງນໍາໃຊ້ ຫຼື ບໍ່ນໍາໃຊ້ມາດຕະການຕ້ານການທຸ້ມຕະຫຼາດ ຫຼື ການອຸດໜູນ.

**ມາດຕາ 28 ໄລຍະເວລາການສືບຫາຂໍ້ມູນ**

ການສືບຫາຂໍ້ມູນ ຕ້ອງໃຫ້ສໍາເລັດພາຍໃນ ສິບສອງເດືອນ ນັບແຕ່ວັນທີ່ໄດ້ອອກຂໍ້ຕົກລົງ ເປັນຕົ້ນໄປ, ຖ້າໃນກໍລະນີຈໍາເປັນ ບໍ່ສາມາດສໍາເລັດໃນກໍານົດເວລາດັ່ງກ່າວ ຄະນະສືບຫາຂໍ້ມູນ ສາມາດສະເໜີ ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອພິຈາລະນາຕໍ່ເວລາ ແຕ່ບໍ່ເກີນ ຫົກເດືອນ.

**ມາດຕາ 29 ການຍົກເລີກການດໍາເນີນການສືບຫາຂໍ້ມູນ**

ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ອອກຂໍ້ຕົກລົງຍົກເລີກການດໍາເນີນການສືບຫາຂໍ້ມູນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ຮ້ອງຂໍຖອນຄໍາຮ້ອງຂອງຕົນ;
2. ບໍ່ມີຫຼັກຖານຂໍ້ມູນຄວາມຈິງ ທີ່ພິສູດວ່າມີຄວາມກ່ຽວພັນລະຫວ່າງການທຸ້ມຕະຫຼາດ ຫຼື ການອຸດໜູນ ກັບຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ;
3. ຜົນການກໍານົດອັດຕາການທຸ້ມຕະຫຼາດ ຕໍ່າກວ່າ ສອງສ່ວນຮ້ອຍ ຂອງລາຄາສົ່ງອອກ;

4. ປະລິມານການນຳເຂົ້າສິນຄ້າທຸ້ມຕະຫຼາດ ໜ້ອຍກ່ວາ ສາມສ່ວນຮ້ອຍ ຂອງການນຳເຂົ້າສິນຄ້າທີ່ຄ້າຍຄືກັນເຂົ້າມາໃນປະເທດ ຫຼື ປະລິມານການນຳເຂົ້າສິນຄ້າທຸ້ມຕະຫຼາດ ຈາກແຕ່ລະປະເທດລວມກັນ ບໍ່ເກີນ ເຈັດສ່ວນຮ້ອຍ ຂອງປະລິມານການນຳເຂົ້າສິນຄ້າທີ່ຄ້າຍຄືກັນທັງໝົດ;

5. ຜົນການກຳນົດປະລິມານການອຸດໜູນ ຕໍ່າກວ່າ ໜຶ່ງສ່ວນຮ້ອຍ ຂອງມູນຄ່າສິນຄ້າທີ່ມີແຫຼ່ງກຳເນີດຈາກປະເທດພັດທະນາ ຫຼື ບໍ່ເກີນ ສອງສ່ວນຮ້ອຍ ຂອງມູນຄ່າສິນຄ້າທີ່ມີແຫຼ່ງກຳເນີດຈາກປະເທດກຳລັງພັດທະນາທີ່ເປັນສະມາຊິກຂອງອົງການການຄ້າໂລກ;

6. ປະລິມານການນຳເຂົ້າສິນຄ້າທີ່ໄດ້ຮັບການອຸດໜູນ ທີ່ມີແຫຼ່ງກຳເນີດຈາກປະເທດກຳລັງພັດທະນາທີ່ເປັນສະມາຊິກຂອງອົງການການຄ້າໂລກ ໜ້ອຍກວ່າ ສີ່ສ່ວນຮ້ອຍ ຂອງການນຳເຂົ້າສິນຄ້າທີ່ຄ້າຍຄືກັນ ຫຼື ປະລິມານຂອງສິນຄ້ານຳເຂົ້າທີ່ໄດ້ຮັບການອຸດໜູນຈາກແຕ່ລະປະເທດ ລວມກັນບໍ່ເກີນ ເກົ້າສ່ວນຮ້ອຍ ຂອງປະລິມານການນຳເຂົ້າສິນຄ້າທີ່ຄ້າຍຄືກັນທັງໝົດ;

7. ເຫດຜົນອື່ນ.

ພາຍຫຼັງອອກຂໍ້ຕົກລົງຍົກເລີກການດຳເນີນການສືບຫາຂໍ້ມູນ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງແຈ້ງໃຫ້ອົງການການຄ້າໂລກ ແລະ ຜູ້ມີສ່ວນກ່ຽວຂ້ອງ ພ້ອມທັງເຜີຍແຜ່ໃຫ້ສັງຄົມຊາບ.

**ມາດຕາ 30 ການຮັກສາຂໍ້ມູນທີ່ເປັນຄວາມລັບ**

ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ ຕ້ອງເກັບຮັກສາຂໍ້ມູນທີ່ເປັນຄວາມລັບ ຫຼື ຂໍ້ມູນທີ່ຜູ້ສະໜອງສະເໜີໃຫ້ເປັນຄວາມລັບ ແລະ ບໍ່ສາມາດເປີດເຜີຍຕໍ່ສັງຄົມໄດ້ ຖ້າບໍ່ໄດ້ຮັບອະນຸຍາດຈາກຜູ້ສະໜອງຂໍ້ມູນ.

ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ ອາດຮຽກຮ້ອງໃຫ້ຜູ້ສະໜອງຂໍ້ມູນ ສະຫຼຸບຫຍໍ້ກ່ຽວກັບຂໍ້ມູນທີ່ສາມາດເປີດເຜີຍໄດ້, ຖ້າຜູ້ສະໜອງ ບໍ່ສາມາດສະຫຼຸບຫຍໍ້ໄດ້ ກໍຕ້ອງໃຫ້ເຫດຜົນ.

ຖ້າເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ ຫາກເຫັນວ່າການຮ້ອງຂໍໃຫ້ຮັກສາຂໍ້ມູນເປັນຄວາມລັບນັ້ນບໍ່ມີເຫດຜົນພຽງພໍ ແລະ ຜູ້ສະໜອງຂໍ້ມູນ ບໍ່ເຫັນດີໃຫ້ເປີດເຜີຍຕໍ່ສັງຄົມ ຫຼື ບໍ່ສາມາດສັງລວມຫຍໍ້ ໂດຍບໍ່ມີເຫດຜົນພຽງພໍ ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ ອາດຈະບໍ່ນຳເອົາຂໍ້ມູນນັ້ນມາປະກອບການພິຈາລະນາ ເວັ້ນເສຍແຕ່ ຈະມີການພິສູດຈາກແຫຼ່ງຂໍ້ມູນອື່ນວ່າ ຂໍ້ມູນນັ້ນເປັນຂໍ້ມູນທີ່ຖືກຕ້ອງ.

**ມາດຕາ 31 ງົບປະມານໃຊ້ຈ່າຍໃນການດຳເນີນການສືບຫາຂໍ້ມູນ**

ງົບປະມານໃຊ້ຈ່າຍໃນການດຳເນີນການສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍຈາກການທຸ້ມຕະຫຼາດ ຫຼື ການອຸດໜູນ ໃຫ້ນຳໃຊ້ງົບປະມານຂອງລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ V
## ເຈົ້າໜ້າທີ່ສືບຫາຂໍ້ມູນ

**ມາດຕາ 32 ເຈົ້າໜ້າທີ່ສືບຫາຂໍ້ມູນ**

ເຈົ້າໜ້າທີ່ສືບຫາຂໍ້ມູນ ແມ່ນ ພະນັກງານ-ລັດຖະກອນ ທີ່ໄດ້ຮັບການແຕ່ງຕັ້ງໂດຍລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຮັບຜິດຊອບວຽກງານສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍຈາກການທຸ້ມຕະຫຼາດ ຫຼື ການອຸດໜູນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 33 ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ສືບຫາຂໍ້ມູນ**

ເຈົ້າໜ້າທີ່ສືບຫາຂໍ້ມູນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບກໍາ ແລະ ວິເຄາະຂໍ້ມູນກ່ຽວກັບຄວາມເສຍຫາຍຈາກການທຸ້ມຕະຫຼາດ ຫຼື ການອຸດໜູນ;

2. ສືບຖາມ, ຮຽກເອົາຂໍ້ມູນຈາກຜູ້ຮ້ອງຂໍ, ຜູ້ສົ່ງອອກ, ຜູ້ນໍາເຂົ້າ ແລະ ຜູ້ຜະລິດສິນຄ້າພາຍໃນ ກ່ຽວກັບຄວາມເສຍຫາຍຈາກການທຸ້ມຕະຫຼາດ ຫຼື ການອຸດໜູນ;

3. ສະຫຼຸບ ແລະ ລາຍງານຜົນການສືບຫາຂໍ້ມູນ ກ່ຽວກັບຄວາມເສຍຫາຍຈາກການທຸ້ມຕະຫຼາດ ຫຼື ການອຸດໜູນ ຕໍ່ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອພິຈາລະນາ;

4. ຄົ້ນຄວ້າ ແລະ ສະເໜີກ່ຽວກັບການຍົກເລີກ ຫຼື ຕໍ່ໄລຍະເວລາການນໍາໃຊ້ມາດຕະການຕ້ານການທຸ້ມຕະຫຼາດ ຫຼື ການອຸດໜູນ;

5. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ພາກທີ VI
## ມາດຕະການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ
### ໝວດທີ 1
### ປະເພດຂອງມາດຕະການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ

**ມາດຕາ 34 ປະເພດຂອງມາດຕະການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ**

ມາດຕະການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ມີ ສອງປະເພດ ດັ່ງນີ້:

1. ມາດຕະການຊົ່ວຄາວ;
2. ມາດຕະການທົ່ວໄປ.

**ມາດຕາ 35 ມາດຕະການຊົ່ວຄາວ**

ມາດຕະການຊົ່ວຄາວ ແມ່ນ ມາດຕະການທີ່ນໍາໃຊ້ຕໍ່ຜູ້ນໍາເຂົ້າສິນຄ້າທຸ້ມຕະຫຼາດ ຫຼື ສິນຄ້າທີ່ໄດ້ຮັບການອຸດໜູນ ໃນໄລຍະດໍາເນີນການສືບຫາຂໍ້ມູນ ໂດຍໃຫ້ວາງເງິນຄໍ້າປະກັນຕາມກົດໝາຍ ແລະ ລະບຽບການຂອງກະຊວງການເງິນ.

**ມາດຕາ 36 ມາດຕະການທົ່ວໄປ**

ມາດຕະການທົ່ວໄປ ແມ່ນ ມາດຕະການທີ່ນໍາໃຊ້ຕໍ່ຜູ້ນໍາເຂົ້າສິນຄ້າທຸ້ມຕະຫຼາດ ຫຼື ສິນຄ້າທີ່ໄດ້ຮັບການອຸດໜູນ ພາຍຫຼັງສໍາເລັດການສືບຫາຂໍ້ມູນທີ່ເຫັນວ່າມີຄວາມເສຍຫາຍຕໍ່ຜູ້ຜະລິດສິນຄ້າພາຍໃນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 16, 17 ແລະ 18 ຂອງກົດໝາຍສະບັບນີ້ ດ້ວຍການເພີ່ມອັດຕາພາສີສິນຄ້ານໍາເຂົ້າ.

### ໝວດທີ 2
### ການນໍາໃຊ້ມາດຕະການຊົ່ວຄາວ

**ມາດຕາ 37 ການນໍາໃຊ້ມາດຕະການຊົ່ວຄາວ**

ມາດຕະການຊົ່ວຄາວ ສາມາດນໍາໃຊ້ພາຍຫຼັງ ຫົກສິບວັນ ນັບແຕ່ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ອອກຂໍ້ຕົກລົງໃຫ້ດໍາເນີນການສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍຈາກການທຸ້ມຕະຫຼາດ ຫຼື ການອຸດໜູນເປັນຕົ້ນໄປ.

ໃນໄລຍະດໍາເນີນການສືບຫາຂໍ້ມູນ ແລະ ຜົນການສືບຫາຂໍ້ມູນເບື້ອງຕົ້ນ ພົບວ່າມີການທຸ້ມຕະຫຼາດ ຫຼື ການອຸດໜູນ ທີ່ໄດ້ສ້າງຄວາມເສຍຫາຍຕໍ່ຜູ້ຜະລິດສິນຄ້າພາຍໃນ ແລະ ເຫັນວ່າ ມີຄວາມຈໍາເປັນຕ້ອງໄດ້ນໍາໃຊ້

ມາດຕະການຊົ່ວຄາວ ເພື່ອປ້ອງກັນຄວາມເສຍຫາຍໃນລະຫວ່າງການສືບຫາຂໍ້ມູນ, ຄະນະສືບຫາຂໍ້ມູນ ຕ້ອງລາຍງານຕໍ່ ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ໂດຍທັນທີ ເພື່ອສະເໜີຕໍ່ ລັດຖະບານ ພິຈາລະນານໍາໃຊ້ມາດຕະການຊົ່ວຄາວ.

ພາຍຫຼັງ ລັດຖະບານ ໄດ້ຕົກລົງນໍາໃຊ້ມາດຕະການຊົ່ວຄາວ ກະຊວງອຸດສາຫະກາ ແລະ ການຄ້າ ຕ້ອງແຈ້ງໃຫ້ອົງການການຄ້າໂລກ ແລະ ຜູ້ມີສ່ວນກ່ຽວຂ້ອງຊາບ. ກະຊວງການເງິນ ຕ້ອງຈັດຕັ້ງປະຕິບັດມາດຕະການດັ່ງກ່າວ.

**ມາດຕາ 38 ກໍານົດເວລາການນໍາໃຊ້ມາດຕະການຊົ່ວຄາວ**

ການນໍາໃຊ້ມາດຕະການຊົ່ວຄາວຕໍ່ກັບການທຸ້ມຕະຫຼາດ ຕ້ອງນໍາໃຊ້ບໍ່ເກີນ ສີ່ເດືອນ ນັບແຕ່ວັນທີ່ອອກຂໍ້ຕົກລົງນໍາໃຊ້ມາດຕະການ. ຖ້າມີຄໍາຮ້ອງຂໍຈາກຜູ້ສົ່ງອອກທີ່ມີອັດຕາສ່ວນການຄ້າກວມອັດຕາສ່ວນໃຫ່ຍ ຄະນະສືບຫາຂໍ້ມູນ ສາມາດພິຈາລະນາຕໍ່ເວລາໄດ້ບໍ່ເກີນ ສອງເດືອນ ລວມເວລາທັງໝົດບໍ່ໃຫ້ເກີນ ຫົກເດືອນ.

ໃນໄລຍະດໍາເນີນການສືບຫາຂໍ້ມູນ ຖ້າອັດຕາພາສີຊົ່ວຄາວ ຕໍ່າກວ່າອັດຕາການທຸ້ມຕະຫຼາດ ຊຶ່ງພຽງພໍໃນການແກ້ໄຂຄວາມເສຍຫາຍທີ່ເກີດຂຶ້ນ ຄະນະສືບຫາຂໍ້ມູນ ສາມາດນໍາໃຊ້ມາດຕະການຊົ່ວຄາວ ບໍ່ເກີນ ຫົກເດືອນ ນັບແຕ່ວັນທີ່ອອກຂໍ້ຕົກລົງນໍາໃຊ້ມາດຕະການ. ຖ້າມີຄໍາຮ້ອງຂໍຈາກຜູ້ສົ່ງອອກທີ່ມີອັດຕາສ່ວນການຄ້າກວມອັດຕາສ່ວນໃຫ່ຍ ຄະນະສືບຫາຂໍ້ມູນ ສາມາດພິຈາລະນາຕໍ່ເວລາໄດ້ບໍ່ເກີນ ສາມເດືອນ ລວມເວລາທັງໝົດບໍ່ໃຫ້ເກີນ ເກົ້າເດືອນ.

ການນໍາໃຊ້ມາດຕະການຊົ່ວຄາວຕໍ່ກັບການອຸດໜູນ ຕ້ອງນໍາໃຊ້ບໍ່ເກີນ ສີ່ເດືອນ ນັບແຕ່ວັນທີ່ອອກຂໍ້ຕົກລົງນໍາໃຊ້ມາດຕະການເປັນຕົ້ນໄປ.

**ມາດຕາ 39 ການຍົກເລີກມາດຕະການຊົ່ວຄາວ**

ລັດຖະບານ ພິຈາລະນາຍົກເລີກມາດຕະການຊົ່ວຄາວ ຕາມການສະເໜີຂອງ ກະຊວງອຸດສາຫະກໍາ ແລະ ການຄ້າ ພາຍຫຼັງການສືບຫາຂໍ້ມູນ ພົບວ່າການທຸ້ມຕະຫຼາດ ຫຼື ການອຸດໜູນ ບໍ່ໄດ້ສ້າງຄວາມເສຍຫາຍຕໍ່ຜູ້ຜະລິດສິນຄ້າພາຍໃນ.

ພາຍຫຼັງ ລັດຖະບານ ໄດ້ຕົກລົງຍົກເລີກການນໍາໃຊ້ມາດຕະການຊົ່ວຄາວ ກະຊວງອຸດສາຫະກໍາ ແລະ ການຄ້າ ຕ້ອງແຈ້ງໃຫ້ອົງການການຄ້າໂລກ ແລະ ຜູ້ມີສ່ວນກ່ຽວຂ້ອງຊາບ. ກະຊວງການເງິນ ຕ້ອງສົ່ງເງິນຄໍ້າປະກັນຄືນໃຫ້ຜູ້ນໍາເຂົ້າສິນຄ້າ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 40 ການຕົກລົງ ຍົກເລີກການທຸ້ມຕະຫຼາດ ຫຼື ການອຸດໜູນ**

ການຕົກລົງ ຍົກເລີກການທຸ້ມຕະຫຼາດ ຫຼື ການອຸດໜູນ ເປັນການສ້າງຂໍ້ຕົກລົງລະຫວ່າງ ກະຊວງອຸດສາຫະກໍາ ແລະ ການຄ້າ ກັບ ຜູ້ສົ່ງອອກ ເພື່ອຢຸດຕິການສືບຫາຂໍ້ມູນ ໂດຍບໍ່ນໍາໃຊ້ມາດຕະການຕ້ານການທຸ້ມຕະຫຼາດ ຫຼື ການອຸດໜູນ ຊຶ່ງຈະຖືກພິຈາລະນາໃນກໍລະນີ ດັ່ງນີ້:

1. ກະຊວງອຸດສາຫະກໍາ ແລະ ການຄ້າ ສາມາດສໍາເລັດຂໍ້ຕົກລົງກັບຜູ້ສົ່ງອອກ ຊຶ່ງຜູ້ສົ່ງອອກ ເຫັນດີປັບລາຄາຂອງສິນຄ້າທຸ້ມຕະຫຼາດໃຫ້ສູງຂຶ້ນ ຫຼື ຍົກເລີກການສົ່ງອອກສິນຄ້າໃນລາຄາທຸ້ມຕະຫຼາດ.

2. ກະຊວງອຸດສາຫະກໍາ ແລະ ການຄ້າ ສາມາດສໍາເລັດຂໍ້ຕົກລົງກັບຜູ້ສົ່ງອອກ ຊຶ່ງຜູ້ສົ່ງອອກ ເຫັນດີປັບລາຄາຂອງສິນຄ້າທີ່ໄດ້ຮັບການອຸດໜູນໃຫ້ສູງຂຶ້ນ ຫຼື ລັດຖະບານຂອງປະເທດຜູ້ສົ່ງອອກສິນຄ້າທີ່ໄດ້ຮັບການອຸດໜູນ ເຫັນດີລົບລ້າງ, ຈໍາກັດການອຸດໜູນ ຫຼື ໃຊ້ມາດຕະການອື່ນ ເພື່ອແກ້ໄຂຜົນກະທົບຂອງການອຸດໜູນ.

ການສ້າງຂໍ້ຕົກລົງ ຍົກເລີກການທຸ່ມຕະຫຼາດ ຫຼື ການອຸດໜູນ ເພື່ອຈຸດປະສົງການທົດແທນຄວາມເສຍຫາຍຈາກການທຸ່ມຕະຫຼາດ ຫຼື ການອຸດໜູນ ເທົ່ານັ້ນ ແລະ ຕ້ອງບໍ່ກຳນົດ ໃຫ້ມີການປັບລາຄາສູງກວ່າ ອັດຕາການທຸ່ມຕະຫຼາດ ຫຼື ປະລິມານການອຸດໜູນ.

ຂັ້ນຕອນການສ້າງຂໍ້ຕົກລົງ ຍົກເລີກການທຸ່ມຕະຫຼາດ ຫຼື ການອຸດໜູນ ມີດັ່ງນີ້:

ການສ້າງຂໍ້ຕົກລົງ ຍົກເລີກການທຸ່ມຕະຫຼາດ ຫຼື ການອຸດໜູນ ຈະເຮັດໄດ້ພາຍຫຼັງທີ່ຄະນະສືບຫາຂໍ້ມູນສຳເລັດຜົນການດຳເນີນສືບຫາຂໍ້ມູນເບື້ອງຕົ້ນ ແລະ ພົບເຫັນຄວາມເສຍຫາຍທີ່ເກີດຂຶ້ນ. ກະຊວງອຸດສາຫະກຳ ແລະ ການຄ້າ ຈະເປັນຝ່າຍສະເໜີສ້າງຂໍ້ຕົກລົງ ຫຼື ຜູ້ສົ່ງອອກ ຈະເປັນຝ່າຍສະເໜີ ກໍໄດ້.

ກະຊວງອຸດສາຫະກຳ ແລະ ການຄ້າ ສາມາດປະຕິເສດການສະເໜີສ້າງຂໍ້ຕົກລົງຂອງຜູ້ສົ່ງອອກ ຖ້າເຫັນວ່າຂໍ້ສະເໜີດັ່ງກ່າວ ມີຄວາມຫຍຸ້ງຍາກໃນທາງປະຕິບັດ ແລະ ຕ້ອງແຈ້ງເຫດຜົນຂອງການປະຕິເສດຂໍ້ສະເໜີນັ້ນ ໃຫ້ຜູ້ສົ່ງອອກຊາບ. ຖ້າຜູ້ສົ່ງອອກ ປະຕິເສດ ຫຼື ບໍ່ຍອມຮັບຂໍ້ສະເໜີການສ້າງຂໍ້ຕົກລົງ ກະຊວງອຸດສາຫະກຳ ແລະ ການຄ້າ ຈະຕ້ອງບໍ່ຖືເອົາການປະຕິເສດດັ່ງກ່າວ ມາພິຈາລະນາໄປໃນທາງລົບຕໍ່ ຜູ້ສົ່ງອອກ.

ຜູ້ສົ່ງອອກທີ່ສ້າງຂໍ້ຕົກລົງ ກັບກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງໃຫ້ຂໍ້ມູນຂ່າວສານໃນການຈັດຕັ້ງປະຕິບັດຂໍ້ຕົກລົງ ຕາມໄລຍະເວລາທີ່ກຳນົດ ແລະ ຕ້ອງຍອມໃຫ້ຄະນະສືບຫາຂໍ້ມູນ ກວດສອບຄວາມເປັນຈິງຂອງຂໍ້ມູນຂ່າວສານນັ້ນ. ຖ້າມີການລະເມີດຂໍ້ຕົກລົງ ຄະນະສືບຫາຂໍ້ມູນ ຕ້ອງນຳໃຊ້ຂໍ້ມູນທີ່ມີຢູ່ເປັນພື້ນຖານໃນການກຳນົດມາດຕະການຊົ່ວຄາວ ແລະ ລາຍງານ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອສະເໜີຕໍ່ ລັດຖະບານ ພິຈາລະນາອອກຂໍ້ຕົກລົງນຳໃຊ້ມາດຕະການດັ່ງກ່າວ ແລະ ດຳເນີນຂະບວນການສືບຫາຂໍ້ມູນຕໍ່ໄປ. ລັດຖະບານ ຕ້ອງເກັບຄ່າພາສີ ຍ້ອນຫຼັງ ເກົ້າສິບວັນ ກ່ອນວັນທີ່ປະກາດໃຊ້ມາດຕະການຊົ່ວຄາວຕາມອັດຕາທີ່ໄດ້ກຳນົດໃນຜົນການຕັດສິນຂັ້ນສຸດທ້າຍ.

## ໝວດທີ 3
## ການນຳໃຊ້ມາດຕະການທົ່ວໄປ

### ມາດຕາ 41 ການນຳໃຊ້ມາດຕະການທົ່ວໄປ

ພາຍຫຼັງສຳເລັດການສືບຫາຂໍ້ມູນ ແລະ ຜົນການສືບຫາຂໍ້ມູນຢັ້ງຢືນວ່າ ມີການທຸ່ມຕະຫຼາດ ຫຼື ການອຸດໜູນ ແລະ ໄດ້ສ້າງຄວາມເສຍຫາຍຕໍ່ຜູ້ຜະລິດສິນຄ້າພາຍໃນ ຄະນະສືບຫາຂໍ້ມູນ ຕ້ອງລາຍງານ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອສະເໜີຕໍ່ ລັດຖະບານ ພິຈາລະນານຳໃຊ້ມາດຕະການທົ່ວໄປ.

ພາຍຫຼັງໄດ້ຮັບໜັງສືສະເໜີຈາກກະຊວງອຸດສາຫະກຳ ແລະ ການຄ້າ ລັດຖະບານ ສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາອະນຸມັດການເພີ່ມອັດຕາພາສີຕາມທີ່ໄດ້ກຳນົດໃນຜົນການຕັດສິນຂັ້ນສຸດທ້າຍ. ພາຍຫຼັງ ຄະນະປະຈຳສະພາແຫ່ງຊາດອະນຸມັດ ລັດຖະບານ ພິຈາລະນາອອກຂໍ້ຕົກລົງນຳໃຊ້ມາດຕະການທົ່ວໄປ ພາຍໃນ ສິບຫ້າວັນ ແລະ ມອບໃຫ້ ກະຊວງການເງິນ ເປັນຜູ້ຈັດຕັ້ງປະຕິບັດ.

ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງແຈ້ງການນຳໃຊ້ມາດຕະການທົ່ວໄປໃຫ້ ອົງການການຄ້າໂລກ ແລະ ຜູ້ມີສ່ວນກ່ຽວຂ້ອງຊາບໂດຍໄວ.

ອັດຕາພາສີທີ່ບັງຄັບໃຊ້ໃນມາດຕະການທົ່ວໄປ ແມ່ນກຳນົດເພື່ອແກ້ໄຂຄວາມເສຍຫາຍເທົ່ານັ້ນ ແລະ ຕ້ອງກຳນົດໃຫ້ເທົ່າກັບ ຫຼື ຕ່ຳກວ່າ ອັດຕາການທຸ່ມຕະຫຼາດ ຫຼື ປະລິມານການອຸດໜູນ ຂອງຜູ້ສົ່ງອອກ, ເວັ້ນເສຍແຕ່ເປັນການປະຕິບັດຕາມການຕົກລົງ ຍົກເລີກການທຸ່ມຕະຫຼາດ ແລະ ການອຸດໜູນ ທີ່ໄດ້ກຳນົດໄວ້ໃນມາດຕາ 40 ຂອງກົດໝາຍສະບັບນີ້.

**ມາດຕາ 42 ໄລຍະເວລາການນໍາໃຊ້ມາດຕະການທົ່ວໄປ**

ການນໍາໃຊ້ມາດຕະການທົ່ວໄປ ສາມາດນໍາໃຊ້ໄດ້ສູງສຸດບໍ່ເກີນ ຫ້າປີ ນັບຈາກວັນທີ່ ລັດຖະບານ ອອກຂໍ້ຕົກລົງນໍາໃຊ້ມາດຕະການ ແລະ ສາມາດສືບຕໍ່ນໍາໃຊ້ໄດ້ຕະຫຼອດໄປ ພາຍຫຼັງມີການທົບທວນ ຕາມທີ່ໄດ້ກໍານົດໄວ້ໃນວັກ 2 ມາດຕາ 43 ຂອງກົດໝາຍສະບັບນີ້ ທີ່ເຫັນວ່າຜູ້ຜະລິດສິນຄ້າພາຍໃນຍັງໄດ້ຮັບຄວາມເສຍຫາຍ ຈາກການທຸ້ມຕະຫຼາດ ຫຼື ການອຸດໜູນ.

**ມາດຕາ 43 ການທົບທວນຄືນການນໍາໃຊ້ມາດຕະການທົ່ວໄປ**

ການທົບທວນຄືນການນໍາໃຊ້ມາດຕະການທົ່ວໄປ ຈະດໍາເນີນໄດ້ກໍຕໍ່ເມື່ອ ຄະນະສືບຫາຂໍ້ມູນເຫັນສົມຄວນໃຫ້ມີການດໍາເນີນການທົບທວນ ຫຼື ໄດ້ຮັບຄໍາຮ້ອງຈາກຜູ້ມີສ່ວນກ່ຽວຂ້ອງ ແລະ ຕ້ອງສໍາເລັດພາຍໃນເວລາ ໜຶ່ງປີ ນັບແຕ່ວັນປະກາດໃຫ້ມີການທົບທວນຄືນ.

ການທົບທວນຄືນ ຄວນດໍາເນີນການກ່ອນ ໜຶ່ງປີ ກ່ອນທີ່ໄລຍະເວລາການນໍາໃຊ້ມາດຕະການທົ່ວໄປຈະສິ້ນສຸດລົງ ຕາມການສະເໜີຂອງຜູ້ມີສ່ວນກ່ຽວຂ້ອງ ເມື່ອເຫັນວ່າ ຖ້າບໍ່ສືບຕໍ່ນໍາໃຊ້ມາດຕະການທົ່ວໄປ ຈະເຮັດໃຫ້ການທຸ້ມຕະຫຼາດ ຫຼື ການອຸດໜູນ ສືບຕໍ່ສ້າງຄວາມເສຍຫາຍຕໍ່ຜູ້ຜະລິດສິນຄ້າພາຍໃນ.

ການທົບທວນຄືນ ຄວນດໍາເນີນການ ໜຶ່ງປີ ພາຍຫຼັງມີການນໍາໃຊ້ມາດຕະການທົ່ວໄປ ໂດຍພິຈາລະນາທົບທວນ ຍົກເລີກການເກັບ ຫຼື ດັດແກ້ອັດຕາພາສີ ຕາມການສະເໜີຂອງຜູ້ມີສ່ວນກ່ຽວຂ້ອງ ເມື່ອເຫັນວ່າ ມີຫຼັກຖານພຽງພໍກ່ຽວກັບຄວາມເສຍຫາຍຂອງ ການທຸ້ມຕະຫຼາດ ຫຼື ການອຸດໜູນ.

ຄະນະສືບຫາຂໍ້ມູນ ຄວນພິຈາລະນາທົບທວນການເກັບຄ່າພາສີ ສໍາລັບຜູ້ສົ່ງອອກ ທີ່ບໍ່ໄດ້ສົ່ງສິນຄ້າທຸ້ມຕະຫຼາດ ຫຼື ສິນຄ້າທີ່ໄດ້ຮັບການອຸດໜູນເຂົ້າມາໃນ ສປປ ລາວ ໃນໄລຍະທີ່ມີການສືບຫາຂໍ້ມູນ ຕາມການສະເໜີຂອງຜູ້ຮ້ອງຂໍ ເມື່ອເຫັນວ່າ ບໍ່ມີຄວາມກ່ຽວຂ້ອງກັບ ຜູ້ສົ່ງອອກ ທີ່ກໍາລັງຖືກນໍາໃຊ້ມາດຕະການທົ່ວໄປ.

**ມາດຕາ 44 ການສົ່ງເງິນຄືນ**

ຜູ້ນໍາເຂົ້າທີ່ຖືກພິຈາລະນາ ອາດຮຽກຮ້ອງໃຫ້ມີການສົ່ງເງິນຄືນ ຖ້າພິສູດໄດ້ວ່າ ອັດຕາການທຸ້ມຕະຫຼາດ ຫຼື ປະລິມານການອຸດໜູນ ໄດ້ຖືກລົບລ້າງ ຫຼື ຫຼຸດລົງຕໍ່າກວ່າອັດຕາພາສີທີ່ກໍານົດໄວ້ ຊຶ່ງຜູ້ນໍາເຂົ້າຕ້ອງຍື່ນຄໍາຮ້ອງ ເຖິງຄະນະສືບຫາຂໍ້ມູນ ພາຍໃນ ຫົກເດືອນ ນັບແຕ່ວັນທີຈ່າຍຄ່າພາສີ. ການສົ່ງເງິນຄືນ ຕ້ອງພິຈາລະນາບໍ່ເກີນ ສິບສອງເດືອນ ແລະ ຕໍ່ໄດ້ສູງສຸດບໍ່ໃຫ້ເກີນ ຫົກເດືອນ ຫຼັງຈາກວັນທີ່ໄດ້ຮັບຄໍາຮ້ອງ.

ການສົ່ງເງິນຄືນ ຕ້ອງດໍາເນີນພາຍໃນ ເກົ້າສິບວັນ ນັບແຕ່ວັນທີ່ໄດ້ຕົກລົງໃຫ້ມີການສົ່ງເງິນຄືນ. ໃນກໍລະນີບໍ່ສາມາດດໍາເນີນ ພາຍໃນ ເກົ້າສິບວັນ ຄະນະສືບຫາຂໍ້ມູນ ຕ້ອງໃຫ້ເຫດຜົນຂອງຄວາມຊັກຊ້າດັ່ງກ່າວ.

**ມາດຕາ 45 ການເກັບຄ່າພາສີຄືນຫຼັງ**

ຄະນະສືບຫາຂໍ້ມູນ ສາມາດກໍານົດໃຫ້ຈັດເກັບຄ່າພາສີຄືນຫຼັງໄດ້ ແຕ່ຕ້ອງບໍ່ເກີນ ເກົ້າສິບວັນ ກ່ອນວັນທີ່ມີການນໍາໃຊ້ມາດຕະການຊົ່ວຄາວ ຖ້າຫາກມີຂໍ້ມູນຄວາມຈິງ ດັ່ງນີ້:

1. ມີປະຫວັດການທຸ້ມຕະຫຼາດສິນຄ້າປະເພດນັ້ນ ແລະ ມີຄວາມເສຍຫາຍເກີດຂຶ້ນ ຫຼື ຜູ້ນໍາເຂົ້າ ຮູ້ວ່າຜູ້ສົ່ງອອກຕ່າງປະເທດໄດ້ທຸ້ມຕະຫຼາດ ຊຶ່ງອາດກໍ່ໃຫ້ເກີດຄວາມເສຍຫາຍ;

2. ຄວາມເສຍຫາຍໄດ້ເກີດຂຶ້ນຈາກການນໍາເຂົ້າສິນຄ້າທຸ້ມຕະຫຼາດເປັນຈໍານວນຫຼາຍ ໃນເວລາອັນສັ້ນ ໂດຍໃຫ້ພິຈາລະນາ ປະລິມານຂອງການນໍາເຂົ້າສິນຄ້າ ໃນຊ່ວງໄລຍະເວລາ ຈາກວັນທີ່ໄດ້ມີການດໍາເນີນສືບຫາຂໍ້ມູນ ຈົນເຖິງ ວັນທີ່ມີການນໍາໃຊ້ມາດຕະການຊົ່ວຄາວ ແລະ ປັດໄຈອື່ນ ທີ່ກ່ຽວຂ້ອງ ເຊັ່ນ: ປະລິມານສິນຄ້ານໍາເຂົ້າໃນສາງເພີ່ມຂຶ້ນຢ່າງກະທັນຫັນ.

ໃນກໍລະນີຂອງການອຸດໜູນ ໃຫ້ພິຈາລະນາພຽງແຕ່ຄວາມເສຍຫາຍທີ່ເກີດຂຶ້ນຈາກການນໍາເຂົ້າສິນຄ້າເປັນຈໍານວນຫຼາຍ ໃນໄລຍະເວລາອັນສັ້ນ.

ການເກັບຄ່າພາສີຄືນຫຼັງ ບໍ່ຄວນນໍາໃຊ້ກັບສິນຄ້າທີ່ນໍາເຂົ້າ ກ່ອນວັນທີ່ເລີ່ມດໍາເນີນການສືບຫາຂໍ້ມູນ.

**ມາດຕາ 46 ການສະເໜີ**

ໃນກໍລະນີທີ່ຜູ້ມີສ່ວນກ່ຽວຂ້ອງ ບໍ່ພໍໃຈຕໍ່ການຕົກລົງນໍາໃຊ້ມາດຕະການທົ່ວໄປ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 41, ການທົບທວນຄືນມາດຕະການທົ່ວໄປ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 43, ແລະ ການສົ່ງເງິນຄືນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 44 ຂອງກົດໝາຍສະບັບນີ້ ສາມາດສະເໜີເຂົ້າຂະບວນການຍຸຕິທໍາ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 47 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ໃຫ້ການຊ່ວຍເຫຼືອ, ປົກປ້ອງຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ;
2. ເປັນສື່ກາງໃຫ້ ຫຼື ຮັບສິນບົນ ເພື່ອຜົນປະໂຫຍດຂອງຕົນ, ພັກພວກ, ຈຸ້ມເຈື້ອ ແລະ ການຈັດຕັ້ງ ຫຼື ບຸກຄົນໃດໜຶ່ງ;
3. ຂັດຂວາງການເຮັດວຽກຂອງເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ;
4. ມີພຶດຕິກໍາອື່ນທີ່ເປັນການລະເມີດກົດໝາຍ.

**ມາດຕາ 48 ຂໍ້ຫ້າມສໍາລັບຜູ້ຜະລິດສິນຄ້າພາຍໃນ**

ຫ້າມຜູ້ຜະລິດສິນຄ້າພາຍໃນ ມີພຶດຕິກໍາ ດັ່ງນີ້:

1. ໃສ່ຮ້າຍປ້າຍສີ ຜູ້ນໍາເຂົ້າສິນຄ້າທີ່ຄ້າຍຄືກັນ, ປອມແປງ, ບິດເບືອນ ຫຼື ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງໃຫ້ແກ່ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ;
2. ໃຫ້ສິນບົນແກ່ພະນັກງານ ແລະ ບຸກຄົນທີ່ກ່ຽວຂ້ອງກັບວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ;
3. ມີພຶດຕິກໍາອື່ນທີ່ເປັນການລະເມີດກົດໝາຍ.

**ມາດຕາ 49 ຂໍ້ຫ້າມສໍາລັບຜູ້ນໍາເຂົ້າ ແລະ ຜູ້ສົ່ງອອກ**

ຫ້າມຜູ້ນໍາເຂົ້າ ແລະ ຜູ້ສົ່ງອອກ ມີພຶດຕິກໍາ ດັ່ງນີ້:

1. ປອມແປງ, ບິດເບືອນ ຫຼື ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງໃຫ້ແກ່ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ;
2. ໃຫ້ສິນບົນແກ່ພະນັກງານ ແລະ ບຸກຄົນທີ່ກ່ຽວຂ້ອງກັບວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ;
3. ມີພຶດຕິກໍາອື່ນທີ່ເປັນການລະເມີດກົດໝາຍ.

**ມາດຕາ 50 ຂໍ້ຫ້າມສຳລັບເຈົ້າໜ້າທີ່, ຄະນະສືບຫາຂໍ້ມູນ ແລະ ພະນັກງານທີ່ກ່ຽວຂ້ອງ**

ຫ້າມເຈົ້າໜ້າທີ່, ຄະນະສືບຫາຂໍ້ມູນ ແລະ ພະນັກງານທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຜົນປະໂຫຍດຂອງຕົນ, ພັກພວກ, ຈຸ້ມເຈື້ອ ແລະ ການຈັດຕັ້ງ ຫຼື ບຸກຄົນໃດໜຶ່ງ;
2. ຮັບສິນບົນຈາກຜູ້ຜະລິດສິນຄ້າພາຍໃນ ຫຼື ຜູ້ນຳເຂົ້າສິນຄ້າ;
3. ເປີດເຜີຍຂໍ້ມູນ, ເອກະສານທີ່ເປັນຄວາມລັບ;
4. ແກ່ຍາວເວລາໃນການພິຈາລະນາເອກະສານຕ່າງໆ ໂດຍບໍ່ມີເຫດຜົນ ຫຼື ກົດໜ່ວງເອກະສານຂອງຜູ້ຜະລິດສິນຄ້າພາຍໃນ, ຜູ້ນຳເຂົ້າ ແລະ ຜູ້ສົ່ງອອກ;
5. ສົມຮູ້ຮ່ວມຄິດກັບຜູ້ຜະລິດສິນຄ້າພາຍໃນ, ຜູ້ນຳເຂົ້າ ແລະ ຜູ້ສົ່ງອອກ ເພື່ອປົກປິດເຊື່ອງອຳຂໍ້ມູນຫຼັກຖານຕ່າງໆ;
6. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ.

## ພາກທີ VIII
## ການຄຸ້ມຄອງ ແລະ ການກວດກາ
### ໝວດທີ 1
### ການຄຸ້ມຄອງວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ

**ມາດຕາ 51 ອົງການຄຸ້ມຄອງວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ**

ລັດ ຄຸ້ມຄອງວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງການເງິນ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ປະກອບດ້ວຍ:

1. ກະຊວງອຸດສາຫະກຳ ແລະ ການຄ້າ;
2. ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ;
3. ຫ້ອງການອຸດສາຫະກຳ ແລະ ການຄ້ານະຄອນ, ເມືອງ.

**ມາດຕາ 52 ສິດ ແລະ ໜ້າທີ່ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

ໃນການຄຸ້ມຄອງວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ເພື່ອສະເໜີ ລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ເປັນແຜນການ, ແຜນງານ, ໂຄງການລະອຽດ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ;

4. ຄົ້ນຄວ້າ ແລະ ສະເໜີຕໍ່ ລັດຖະບານ ພິຈາລະນາຕົກລົງ ຫຼື ຍົກເລີກການນຳໃຊ້ມາດຕະການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ;

5. ອອກຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳກ່ຽວກັບວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ;

6. ຕິດຕາມ ກວດກາການປະຕິບັດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບຜົນກະທົບຈາກການທຸ້ມຕະຫຼາດ ແລະ ການອຸດໜູນ;

7. ສ້າງ, ບຳລຸງ ແຕ່ງຕັ້ງເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍ ພ້ອມທັງ ຍົກລະດັບ ພະນັກງານວິຊາການກ່ຽວກັບວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ;

8. ປຶກສາຫາລື ແລະ ປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າ ແລະ ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

9. ປະສານ, ພົວພັນຮ່ວມມື ແລະ ແລກປ່ຽນບົດຮຽນກັບສາກົນກ່ຽວກັບວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ;

10. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 53 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ ແລະ ແຜນດຳເນີນງານກ່ຽວກັບວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ໃຫ້ແກ່ສັງຄົມ;

3. ອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ ໃນການຈັດຕັ້ງປະຕິບັດວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ;

4. ຮັບການສະເໜີ ແລະ ການແຈ້ງຂໍ້ມູນກ່ຽວກັບວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ຈາກພາກສ່ວນກ່ຽວຂ້ອງ ເພື່ອລາຍງານ ກະຊວງອຸດສາຫະກຳ ແລະ ການຄ້າ ພິຈາລະນາ;

5. ຕິດຕາມ ກວດກາການປະຕິບັດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບຜົນກະທົບຈາກການທຸ້ມຕະຫຼາດ ແລະ ການອຸດໜູນ;

6. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 54 ສິດ ແລະ ໜ້າທີ່ຂອງຫ້ອງການອຸດສາຫະກຳ ແລະ ການຄ້ານະຄອນ, ເມືອງ**

ໃນການຄຸ້ມຄອງວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ຫ້ອງການອຸດສາຫະກຳ ແລະ ການຄ້ານະຄອນ, ເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດແຜນການ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳຂອງຂັ້ນເທິງກ່ຽວກັບວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ;

2. ເຜີຍແຜ່ ແລະ ຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ;

3. ອໍານວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍຈາກການທຸ້ມຕະຫຼາດ ແລະ ການອຸດໜູນ;

4. ຕິດຕາມ ກວດກາ ການປະຕິບັດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບຜົນກະທົບຈາກການທຸ້ມຕະຫຼາດ ແລະ ການອຸດໜູນ;

5. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ຕໍ່ພະແນກອຸດສາຫະກໍາ ແລະ ການຄ້າ ແລະ ອົງການປົກຄອງຂັ້ນນະຄອນ, ເມືອງ ຢ່າງເປັນປົກກະຕິ;

6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 55 ສິດ ແລະ ໜ້າທີ່ຂອງກະຊວງການເງິນ**

ໃນການຄຸ້ມຄອງວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ກະຊວງການເງິນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບຮັກສາ ຫຼື ສົ່ງຄືນ ເງິນຄໍ້າປະກັນ ຈາກການນໍາໃຊ້ມາດຕະການຊົ່ວຄາວ;

2. ເກັບຄ່າພາສີສິນຄ້ານໍາເຂົ້າ ຈາກການນໍາໃຊ້ມາດຕະການທົ່ວໄປ;

3. ປະສານສົມທົບກັບ ກະຊວງອຸດສາຫະກໍາ ແລະ ການຄ້າ ໃນການຄົ້ນຄວ້າການຂຶ້ນອັດຕາພາສີສິນຄ້າຂາເຂົ້າ ເພື່ອຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ;

4. ອອກຂໍ້ຕົກລົງ, ຄໍາສັ່ງ ແລະ ຄໍາແນະນໍາກ່ຽວກັບການເກັບຮັກສາ ຫຼື ສົ່ງຄືນ ເງິນຄໍ້າປະກັນ ຈາກການນໍາໃຊ້ມາດຕະການຊົ່ວຄາວ ແລະ ຄ່າພາສີນໍາເຂົ້າຈາກການນໍາໃຊ້ມາດຕະການທົ່ວໄປ;

5. ປະສານສົມທົບກັບ ກະຊວງອຸດສາຫະກໍາ ແລະ ການຄ້າ ສະຫຼຸບ, ລາຍງານ ກ່ຽວກັບວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນຕໍ່ ລັດຖະບານ ຢ່າງເປັນປົກກະຕິ;

6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 56 ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ**

ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ໃຫ້ການຮ່ວມມື, ສະໜອງຂໍ້ມູນ ແລະ ປະສານສົມທົບກັບ ຂະແໜງອຸດສາຫະກໍາ ແລະ ການຄ້າ ໃນການເຄື່ອນໄຫວວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ

**ມາດຕາ 57 ອົງການກວດກາວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ**

ອົງການກວດກາວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ມີດັ່ງນີ້:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 51 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດຖະບານ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ສື່ມວນຊົນ ເປັນ

ຜູ້ກວດກາການຈັດຕັ້ງປະຕິບັດວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 58 ເນື້ອໃນການກວດກາວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ**

ການກວດກາວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ;

2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ອົງການຄຸ້ມຄອງວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ;

3. ຄວາມຮັບຜິດຊອບ, ການປະພຶດ ແລະ ແບບແຜນວິທີເຮັດວຽກຂອງພະນັກງານ, ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍ.

**ມາດຕາ 59 ຮູບການການກວດກາວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ**

ຮູບການການກວດກາວຽກງານການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ມີດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນການກວດກາທີ່ດໍາເນີນໄປຕາມກົດໝາຍ, ແຜນການ ແລະ ມີກໍານົດເວລາອັນແນ່ນອນ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າຢ່າງໜ້ອຍ ຊາວສີ່ ຊົ່ວໂມງ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາ ໃນກໍລະນີມີຄວາມຈໍາເປັນຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 60 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 61 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

# ພາກທີ X
# ບົດບັນຍັດສຸດທ້າຍ

**ມາດຕາ 62 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 63 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແລ້ວແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**